ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 235 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2021

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ ກົດໝາຍ ວ່າດ້ວຍຍານພາຫະນະທາງບົກ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 31/ສພຊ, ລົງວັນທີ 16 ພະຈິກ 2021 ກ່ຽວກັບການຮັບຮອງເອົາ ກົດໝາຍວ່າດ້ວຍຍານພາຫະນະທາງບົກ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 11/ຄປຈ, ລົງວັນທີ 15 ທັນວາ 2021.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ ກົດໝາຍ ວ່າດ້ວຍຍານພາຫະນະທາງບົກ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 31 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

# ມະຕິ
# ຂອງກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຍານພາຫະນະທາງບົກ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຍານພາຫະນະທາງບົກ ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 10 ພະຈິກ 2021 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 16 ພະຈິກ 2021.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຍານພາຫະນະທາງບົກ ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 04 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2021

# ກົດໝາຍ
# ວ່າດ້ວຍຍານພາຫະນະທາງບົກ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານຍານພາຫະນະທາງບົກ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ, ທັນສະໄໝ, ເອກະພາບ ແລະ ລວມສູນ, ແນໃສ່ຮັບປະກັນຄວາມສະດວກ, ຖືກຕ້ອງ ແລະ ໂປ່ງໃສ, ເປັນລະບຽບຮຽບຮ້ອຍ, ປົກປ້ອງຊີວິດ, ຊັບສິນ, ຜົນປະໂຫຍດຂອງ ບຸກຄົນ, ນິຕິບຸກຄົນ ແລະ ສາທາລະນະ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ຍານພາຫະນະທາງບົກ**

ຍານພາຫະນະທາງບົກ ແມ່ນ ລົດທຸກປະເພດທີ່ແລ່ນດ້ວຍເຄື່ອງຈັກ ທີ່ມີສອງລໍ້ຂຶ້ນໄປ ມີຄົນຂັບ ແລະ ບໍ່ມີຄົນຂັບ ຊຶ່ງໄດ້ອອກແບບ, ປະກອບ ແລະ ຜະລິດ ຕາມມາດຕະຖານເຕັກນິກ ໂດຍນຳໃຊ້ນ້ຳມັນເຊື້ອໄຟ, ອາຍແກັສ, ແສງອາທິດ, ໄຟຟ້າ ແລະ ໄຮໂດຣເຈນ ເປັນພະລັງງານຂັບເຄື່ອນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພະລັງງານສະອາດ** ໝາຍເຖິງ ພະລັງງານໄຟຟ້າ, ໄຮໂດຣເຈນ ແລະ ແສງອາທິດ;
2. **ຊິ້ນສ່ວນ** ໝາຍເຖິງ ຜະລິດຕະພັນ ຫຼື ອຸປະກອນຕ່າງໆ ທີ່ຈະນຳມາປະກອບລົດໃນໂຮງງານໂດຍໄດ້ຮັບການອອກແບບ ແລະ ຜະລິດຈາກໂຮງງານໂດຍກົງ;
3. **ຊີບີຢູ (Completely Built Unit-CBU)** ໝາຍເຖິງ ຍານພາຫະນະທາງບົກທີ່ນຳເຂົ້າເປັນຄັນ;
4. **ອາໄຫຼ່** ໝາຍເຖິງ ຜະລິດຕະພັນ ຫຼື ອຸປະກອນຕ່າງໆ ສຳລັບປ່ຽນຖ່າຍ ຂອງລົດທີ່ໄດ້ຮັບອອກແບບຈາກໂຮງງານຜູ້ຜະລິດ;
5. **ຊີໂອພີ (Conformity of Production-COP)** ໝາຍເຖິງ ການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຂະບວນການຜະລິດ;

6. **ເລກຈັກ** ໝາຍເຖິງ ຕົວເລກ ຫຼື ລະຫັດປະຈຳໜ່ວຍຈັກ;

7. **ເລກຖັງລົດ (Vehicle Identification Number-VIN)** ໝາຍເຖິງ ລະຫັດຂອງຍານພາຫະນະທີ່ບົ່ງບອກ ປະເທດຜະລິດ, ຍີ່ຫໍ້, ປະເພດ, ປີຜະລິດ ແລະ ລຳດັບການຜະລິດ ຂອງຍານພາຫະນະ ຕາມມາດຕະຖານສາກົນ;

8. **ອອບໂຣດ (Off Road)** ໝາຍເຖິງ ຍານພາຫະນະທີ່ ຜ່ານການອອກແບບ ຫຼື ດັດແປງ ຮູບຮ່າງພາຍນອກ ສຳລັບນຳໃຊ້ ໃນການສຳຫຼວດ, ກິລາ, ໃນເຂດທຸລະກັນດານ ຫຼື ພື້ນທີ່ສະເພາະ;

9. **ຖັງລົດ** ໝາຍເຖິງ ໂຄງສ້າງຫຼັກຂອງລົດ;

10. **ໃບທະບຽນຍານພາຫະນະ** ໝາຍເຖິງ ເອກະສານປະຈຳ ຍານພາຫະນະທາງບົກ ທີ່ກຳນົດ ຊື່, ທີ່ຢູ່, ຂໍ້ມູນທາງດ້ານເຕັກນິກ ແລະ ເລກປ້າຍທະບຽນຍານພາຫະນະທາງບົກ;

11. **ຄາບອນໂມນໍອກໄຊ້ (CO)** ໝາຍເຖິງ ອາຍພິດທີ່ ບໍ່ມີສີ ແລະ ບໍ່ມີກິ່ນ ຊຶ່ງເກີດມາຈາກການເຜົາໄໝ້ຂອງເຄື່ອງຈັກທີ່ນຳໃຊ້ພະລັງງານນ້ຳມັນກາຊວນ ຊຶ່ງມີຜົນກະທົບຕໍ່ສຸຂະພາບ;

12. **ໄຮໂດຣຄາບອນ (HC)** ໝາຍເຖິງ ອາຍພິດທີ່ ບໍ່ມີສີ ແລະ ບໍ່ມີກິ່ນ ຊຶ່ງເກີດມາຈາກການເຜົາໄໝ້ຂອງເຄື່ອງຈັກທີ່ນຳໃຊ້ພະລັງງານນ້ຳມັນແອັດຊັງ ຊຶ່ງມີຜົນກະທົບຕໍ່ສຸຂະພາບ;

13. **ຜະລິດຕະພັນ** ໝາຍເຖິງ ລົດ, ຊິ້ນສ່ວນ ແລະ ອາໄຫຼ່ປ່ຽນຖ່າຍ;

14. **ແວ່ນ** ໝາຍເຖິງ ວັດສະດຸທີ່ເຮັດມາຈາກແກ້ວ ແລະ ສານຊີລີຄອນ ທີ່ສາມາດຫຼອມເປັນຮູບໄດ້ເມື່ອເຢັນໂຕແລ້ວ ມີລັກສະນະໃສ ແລະ ແຂງ ຊຶ່ງນຳໄປປະກອບໃສ່ດ້ານ ໜ້າ, ຂ້າງ ແລະ ຫຼັງ ລົດ ເພື່ອໃຫ້ແນມເຫັນ, ປ້ອງກັນ ລົມ, ນ້ຳ, ຝຸ່ນ ແລະ ອື່ນໆ;

15. **ກະຈົກ** ໝາຍເຖິງ ວັດສະດຸທີ່ມີຄວາມສາມາດໃນການສະທ້ອນຮູບພາບ ເພື່ອໃຫ້ແນມເຫັນພາບສະທ້ອນໄດ້ຊັດເຈນ ຊຶ່ງນຳໄປປະກອບໃສ່ໃນຫ້ອງໂດຍສານ ແລະ ດ້ານຂ້າງ, ທ້າຍລົດ ເພື່ອໃຫ້ແນມເຫັນທາງຫຼັງ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຍານພາຫະນະທາງບົກ**

ລັດ ສົ່ງເສີມ ວຽກງານຍານພາຫະນະທາງບົກ ດ້ວຍການ ທົດສອບ ແລະ ວິໄຈ, ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ທີ່ກ້າວໜ້າ ແລະ ທັນສະໄໝ, ພັດທະນາບຸກຄະລາກອນ, ສະໜອງງົບປະມານ ແລະ ວັດຖຸປະກອນທີ່ຈຳເປັນ ເຂົ້າໃນວຽກງານດັ່ງກ່າວ.

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນກ່ຽວກັບການປະກອບ, ຜະລິດ, ສົ່ງອອກ ແລະ ຈຳໜ່າຍ ຍານພາຫະນະທາງບົກທຸກປະເພດ ລວມທັງການນຳເຂົ້າກົນຈັກກະສິກຳ.

ລັດ ສົ່ງເສີມ ການນຳໃຊ້ຍານພາຫະນະທາງບົກ ທີ່ນຳໃຊ້ພະລັງງານສະອາດ, ເປັນມິດຕໍ່ສິ່ງແວດລ້ອມ ແລະ ມີຄວາມປອດໄພຕໍ່ສຸຂະພາບ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຍານພາຫະນະທາງບົກ**

ວຽກງານຍານພາຫະນະທາງບົກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງ ກັບແນວທາງ ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດ ແລະ ແຜນດຳເນີນງານຄວາມປອດໄພທາງຫຼວງ;

2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຄຸ້ມຄອງ ແລະ ບໍລິການໃຫ້ມີຄວາມ ຖືກຕ້ອງ, ວ່ອງໄວ, ໂປ່ງໃສ, ທັນສະໄໝ ແລະ ສາມາດກວດສອບໄດ້;

4. ຖືກຕ້ອງຕາມມາດຕະຖານເຕັກນິກຍານພາຫະນະທາງບົກທີ່ ສປປ ລາວ ຮັບຮູ້;
5. ສອດຄ່ອງກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 6 ພັນທະຂອງຜູ້ນຳໃຊ້ຍານພາຫະນະທາງບົກ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ນຳໃຊ້ຍານພາຫະນະທາງບົກ ຢູ່ດິນແດນຂອງ ສປປ ລາວ ຕ້ອງເຄົາລົບ ແລະ ປະຕິບັດຕາມກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ, ປະກອບສ່ວນໃນການຮັກສາຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ ລວມທັງການປະຕິບັດພັນທະອື່ນ ກ່ຽວກັບວຽກງານຍານພາຫະນະທາງບົກ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນ ແລະ ເຄື່ອນໄຫວວຽກງານຍານພາຫະນະທາງບົກທຸກປະເພດ ໃນຂອບເຂດທົ່ວປະເທດ.

ກົດໝາຍສະບັບນີ້ ບໍ່ນຳໃຊ້ສຳລັບລົດໄຟ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຍານພາຫະນະທາງບົກ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ, ການສ້າງ, ບຳລຸງ, ຍົກລະດັບດ້ານວິຊາການໃຫ້ແກ່ບຸກຄະລາກອນທັງ ພາກລັດ ແລະ ເອກະຊົນ, ການຮ່ວມມືດ້ານການລົງທຶນ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ປະເພດ ແລະ ການນຳເຂົ້າ ຍານພາຫະນະທາງບົກ
### ໝວດທີ 1
### ປະເພດຂອງຍານພາຫະນະທາງບົກ

**ມາດຕາ 9 ປະເພດຍານພາຫະນະທາງບົກ**

ປະເພດຍານພາຫະນະທາງບົກ ມີ ດັ່ງນີ້:
1. ລົດຈັກ;
2. ລົດເບົາ;
3. ລົດຂົນສົ່ງ;
4. ລົດກົນຈັກໜັກ;
5. ລົດກົນຈັກກະສິກຳ;
6. ລົດຮັບໃຊ້ພື້ນທີ່ສະເພາະ.

**ມາດຕາ 10 ລົດຈັກ**

ລົດຈັກ ມີ ດັ່ງນີ້:
1. ສອງລໍ້;
2. ສາມລໍ້;
3. ສີ່ລໍ້.

**ມາດຕາ 11 ລົດເບົາ**

ລົດເບົາ ມີ ດັ່ງນີ້:

1. ລົດເກັງ ແມ່ນ ລົດສີ່ລໍ້ທີ່ມີບ່ອນນັ່ງບໍ່ເກີນ ຫ້າບ່ອນ ລວມທັງບ່ອນຜູ້ຂັບຂີ່ ແລະ ມີນໍ້າໜັກບໍ່ເກີນ ສອງພັນຫ້າຮ້ອຍກິໂລກຣາມ;

2. ລົດກະບະ ແມ່ນ ລົດສີ່ລໍ້ທີ່ມີທ້າຍລົດເປົ່າວ່າງສຳລັບບັນທຸກ, ມີບ່ອນນັ່ງບໍ່ເກີນ ຫ້າບ່ອນ ລວມທັງບ່ອນຜູ້ຂັບຂີ່ ແລະ ມີນໍ້າໜັກບໍ່ເກີນ ສາມພັນຫ້າຮ້ອຍກິໂລກຣາມ;

3. ລົດຈິບ ແມ່ນ ລົດສີ່ລໍ້ທີ່ຍົກພື້ນສູງ, ມີບ່ອນນັ່ງບໍ່ເກີນ ເກົ້າບ່ອນ ລວມທັງບ່ອນຜູ້ຂັບຂີ່ ແລະ ມີນໍ້າໜັກບໍ່ເກີນ ສາມພັນຫ້າຮ້ອຍກິໂລກຣາມ;

4. ລົດຕູ້ ແມ່ນ ລົດສີ່ລໍ້ທີ່ມີ ໜຶ່ງ ຫຼື ສອງ ປະຕູທາງດ້ານຂ້າງເປັນບານເລື່ອນ, ມີບ່ອນນັ່ງບໍ່ເກີນ ເກົ້າບ່ອນ ລວມທັງບ່ອນຜູ້ຂັບຂີ່ ແລະ ມີນໍ້າໜັກບໍ່ເກີນ ສາມພັນຫ້າຮ້ອຍກິໂລກຣາມ.

**ມາດຕາ 12 ລົດຂົນສົ່ງ**

ລົດຂົນສົ່ງ ມີ ດັ່ງນີ້:

1. ລົດຂົນສົ່ງຜູ້ໂດຍສານ ມີ ສາມຂະໜາດ ຄື ຂະໜາດນ້ອຍ ມີບ່ອນນັ່ງບໍ່ເກີນ ເກົ້າບ່ອນ, ຂະໜາດກາງ ມີບ່ອນນັ່ງບໍ່ເກີນ ສາມສິບຫ້າບ່ອນ ແລະ ຂະໜາດໃຫຍ່ ມີບ່ອນນັ່ງແຕ່ ສາມສິບຫົກບ່ອນ ຂຶ້ນໄປ;

2. ລົດຂົນສົ່ງສິນຄ້າ ມີ ສາມຂະໜາດ ຄື ຂະໜາດນ້ອຍ ມີນໍ້າໜັກລົດບໍ່ເກີນ ສາມພັນຫ້າຮ້ອຍກິໂລກຣາມ, ຂະໜາດກາງ ມີນໍ້າໜັກລົດບໍ່ເກີນ ສິບຫ້າພັນກິໂລກຣາມ ແລະ ຂະໜາດໃຫຍ່ ມີນໍ້າໜັກລົດເກີນ ສິບຫ້າພັນກິໂລກຣາມ ຂຶ້ນໄປ.

**ມາດຕາ 13 ລົດກົນຈັກໜັກ**

ລົດກົນຈັກໜັກ ມີ ດັ່ງນີ້:

1. ລົດກົນຈັກໜັກທີ່ຮັບໃຊ້ທົ່ວໄປ ມີ ລົດ ດູດ, ໂລ, ໂລສັ່ນສະເທືອນ, ຈົກ, ຕັກ, ກວາດ, ຕອກເສົາເຂັມ, ຊີເຈາະ, ສີດຢາງ, ປູຢາງ, ເປົ່າລົມ, ຍົກຍໍ, ຈົກຕັກ, ຖອກເທ, ສີດເບຕົງ, ຊີມັງຜົງ, ຍົກ, ໂມ້ເບຕົງ ແລະ ອື່ນໆ;

2. ລົດກົນຈັກໜັກອຸດສາຫະກຳຂຸດຄົ້ນແຮ່ ມີ ລົດ ບັນທຸກແຮ່ທາດ, ບັນທຸກສະໜາມ, ຊີເຈາະ, ຂົນສົ່ງວັດສະດຸພາກສະໜາມ, ເຄື່ອງຈັກຂົບ ແລະ ແຍກວັດສະດຸ, ເຄື່ອງປ້ອນວັດສະດຸ, ເຄື່ອງຮ່ອນວັດສະດຸ ແລະ ອື່ນໆ;

3. ລົດກົນຈັກບໍລິການຂົນສົ່ງ ມີ ລົດ ຫົວລາກ, ຫາງລາກ, ເຄິ່ງຫາງລາກ, ຫາງລາກແບບດ້າມຍົກ, ຕິດຖັງ, ຄໍຍົກ, ຮາບພຽງ, ທ້າຍຍົກ, ຖອກເທ, ບັນທຸກຕູ້ສິນຄ້າ, ບັນທຸກສິນຄ້າແຊ່ເຢັນ, ເກັບກູ້ຊາກລົດ, ບັນທຸກ, ບັນທຸກຕິດເຄື່ອງຍົກ, ນໍ້າມັນ, ອາຍແກັສ, ສານເຄມີ, ຂອງແຫຼວ, ນໍ້າ ແລະ ອື່ນໆ;

4. ລົດອຸດສາຫະກຳ ແລະ ປຸງແຕ່ງໄມ້ ມີ ລົດ ໄຖ ແລະ ຄີບໄມ້, ລຳລຽງ, ເຄື່ອງຈັກຕັດຕົ້ນໄມ້, ຈັກຕັດໄມ້ທ່ອນ, ລົດລາກ, ລົດຄີບ, ຍົກ ແລະ ອື່ນໆ;

5. ລົດກົນຈັກ ສຳລັບບໍລິການສາທາລະນະ ມີ ລົດ ບັນທຸກຂີ້ເຫຍື້ອ, ອັດຂີ້ເຫຍື້ອ, ປັດຝຸ່ນ, ດູດຝຸ່ນ, ດູດນໍ້າເປື້ອນ, ສີດນໍ້າລ້າງທາງ, ກວາດຕີນຢາງ, ຕັກຕີນຢາງ, ອັດແໜ້ນຕີນໜາມ ແລະ ອື່ນໆ;

6. ລົດກົນຈັກສະເພາະ ມີ ລົດ ກູ້ໄພຈະລາຈອນ, ຮັບສົ່ງຄົນເຈັບ, ມອດໄຟ, ຂົນສົ່ງວັດຖຸອັນຕະລາຍ, ເຄື່ອງຈັກປູວັດສະດຸ, ສີດພົ່ນທຸກຊະນິດ, ຮັບໃຊ້ວຽກງານໄຟຟ້າ, ເຮືອນເຄື່ອນທີ່, ລົດສົ່ງສັນຍານຖ່າຍທອດວິທະຍຸ-ໂທລະພາບ, ລົດກວດວັດຖຸລະເບີດ ແລະ ອື່ນໆ.

**ມາດຕາ 14 ລົດກົນຈັກກະສິກຳ**

ລົດກົນຈັກກະສິກຳ ມີ ລົດ ໄຖທຸກຊະນິດ, ຄາດ, ປັກດຳ, ຫວ່ານເມັດ, ຢອດເມັດ, ປັ່ນ, ມ້ອນຫຍ້າ, ມ້ອນເຟືອງ, ກ່ຽວເຂົ້າ, ເກັບຜົນລະປູກ, ຕັດຫຍ້າ ແລະ ກົນຈັກອື່ນທີ່ນຳໃຊ້ເຂົ້າໃນວຽກງານກະສິກຳ ຊຶ່ງໃຫ້ນຳໃຊ້ຕາມພື້ນທີ່ກະສິກຳສະເພາະ.

**ມາດຕາ 15 ລົດຮັບໃຊ້ພື້ນທີ່ສະເພາະ**

ລົດຮັບໃຊ້ພື້ນທີ່ສະເພາະ ມີ ລົດ ກ໋ອຟ, ຮັບໃຊ້ສະໜາມກ໋ອຟ, ທ່ຽວຊົມສະເພາະໃນແຫຼ່ງທ່ອງທ່ຽວ, ກິລາ, ບັກກີ້ (Buggy), ຈັກສີ່ລໍ້ ເອທີວີ(ATV), ໂກຄາດ (Gokart), ອອບໂຣດ (Off Road) ແລະ ອື່ນໆ.

## ໝວດທີ 2
## ການນຳເຂົ້າຍານພາຫະນະທາງບົກ

**ມາດຕາ 16 ການນຳເຂົ້າຍານພາຫະນະທາງບົກ**

ການນຳເຂົ້າຍານພາຫະນະທາງບົກ ມີ ສອງຮູບແບບ ດັ່ງນີ້:

1. ການນຳເຂົ້າແບບຖາວອນ;
2. ການນຳເຂົ້າແບບຊົ່ວຄາວ.

ການນຳເຂົ້າຍານພາຫະນະທາງບົກ ຕ້ອງໄດ້ຮັບອະນຸຍາດທາງດ້ານເຕັກນິກ ຈາກກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ຂໍອະນຸຍາດນຳເຂົ້າຈາກຂະແໜງການອຸດສາຫະກຳ ແລະ ການຄ້າ, ຍົກເວັ້ນການນຳເຂົ້າຍານພາຫະນະທາງບົກແບບຊົ່ວຄາວ ທີ່ບໍ່ປ່ຽນປ້າຍທະບຽນ.

**ມາດຕາ 17 ການນຳເຂົ້າຍານພາຫະນະທາງບົກແບບຖາວອນ**

ການນຳເຂົ້າຍານພາຫະນະທາງບົກແບບຖາວອນ ແມ່ນ ການນຳເຂົ້າເພື່ອຈຳໜ່າຍ, ຂຶ້ນທະບຽນ ແລະ ນຳໃຊ້ຖາວອນ ຢູ່ ສປປ ລາວ.

ຍານພາຫະນະທາງບົກທີ່ນຳເຂົ້າແບບຖາວອນ ໃນກໍລະນີເປັນລົດໃໝ່ ຕ້ອງມີໃບຢັ້ງຢືນດ້ານຄຸນນະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມ ຈາກໂຮງງານຜະລິດ, ສຳລັບ ລົດທີ່ນຳໃຊ້ແລ້ວ ຕ້ອງໄດ້ມີໃບຢັ້ງຢືນການກວດກາເຕັກນິກ ຈາກປະເທດຕົ້ນທາງຂອງປີທີ່ນຳເຂົ້າ ພາຍໃນເວລາ ສິບສອງເດືອນ ນັບແຕ່ວັນກວດກາເຕັກນິກ ແລະ ປະຕິບັດຕາມລະບຽບການສະເພາະ.

ຍານພາຫະນະທາງບົກທຸກປະເພດທີ່ນຳເຂົ້າແບບຖາວອນ ຕ້ອງໄດ້ມາດຕະຖານ ແລະ ປະຕິບັດຕາມເງື່ອນໄຂ ທາງດ້ານເຕັກນິກ ທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງກົດໝາຍສະບັບນີ້.

**ມາດຕາ 18 ການນຳເຂົ້າຍານພາຫະນະທາງບົກແບບຊົ່ວຄາວ**

ການນຳເຂົ້າຍານພາຫະນະທາງບົກແບບຊົ່ວຄາວ ມີ ສອງກໍລະນີ ດັ່ງນີ້:

1. ການນຳເຂົ້າຍານພາຫະນະທາງບົກແບບຊົ່ວຄາວ ທີ່ບໍ່ປ່ຽນປ້າຍທະບຽນ ແມ່ນ ການນຳເຂົ້າເພື່ອທ່ອງທ່ຽວ, ຢ້ຽມຢາມ, ວາງສະແດງ, ຄົ້ນຄວ້າ, ວິໄຈ, ທົດລອງ, ທົດສອບ, ສຳຫຼວດ, ອອກແບບ, ຂົນສົ່ງສິນຄ້າ ແລະ ຜູ້ໂດຍສານ. ຍານພາຫະນະທາງບົກທີ່ນຳເຂົ້າແບບຊົ່ວຄາວ ຕ້ອງຮັບປະກັນມາດຕະຖານເຕັກນິກ, ຄວາມປອດໄພ ແລະ ສິ່ງແວດລ້ອມ ບົນພື້ນຖານການປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ກ່ຽວກັບການຂົນສົ່ງທາງບົກລະຫວ່າງປະເທດ.

2. ການນຳເຂົ້າຍານພາຫະນະທາງບົກແບບຊົ່ວຄາວ ທີ່ປ່ຽນປ້າຍທະບຽນ ຕ້ອງມີສະພາບເຕັກນິກດີ ແລະ ໃຫ້ປະຕິບັດ ດັ່ງນີ້:

1). ການນຳເຂົ້າລົດ ເພື່ອຮັບໃຊ້ສຳນັກງານຜູ້ຕາງໜ້າ ຂອງຕ່າງປະເທດປະຈຳ ຢູ່ ສປປ ລາວ ຕ້ອງໄດ້ຂໍອະນຸຍາດນຳກະຊວງການຕ່າງປະເທດ ຊຶ່ງມີກຳນົດເວລານຳໃຊ້ ສອງປີ ແລະ ສາມາດຕໍ່ອາຍຸໄດ້;

2). ການນຳເຂົ້າລົດ ເພື່ອນຳໃຊ້ເຂົ້າໃນໂຄງການກໍ່ສ້າງທີ່ເປັນບຸລິມະສິດ ຂອງລັດຖະບານ ລວມທັງເຂດເສດຖະກິດພິເສດ ໃນເວລານຳເຂົ້າ ຕ້ອງມີການຮັບຮອງແຜນນຳເຂົ້າຈາກຂະແໜງການທີ່ກ່ຽວຂ້ອງ.

ຍານພາຫະນະທາງບົກທີ່ນຳເຂົ້າແບບຊົ່ວຄາວ ພາຍຫຼັງສຳເລັດການປະຕິບັດໜ້າທີ່ວຽກງານແລ້ວ ໃຫ້ນຳລົດດັ່ງກ່າວອອກຄືນ, ຖ້າຫາກບໍ່ນຳອອກຄືນ ຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 19 ມາດຕະຖານ ແລະ ເງື່ອນໄຂ ທາງດ້ານເຕັກນິກຂອງຍານພາຫະນະທາງບົກ**

ຍານພາຫະນະທາງບົກທີ່ຈະນຳເຂົ້າ ສປປ ລາວ ຕ້ອງມີຄຸນນະພາບຖືກຕ້ອງຕາມມາດຕະຖານເຕັກນິກທີ່ ສປປ ລາວ ຮັບຮູ້ ແລະ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ພວງມະໄລຊ້າຍ, ຍົກເວັ້ນການນຳເຂົ້າຊົ່ວຄາວ;
2. ລົດຈັກ ທີ່ມີຄວາມແຮງບໍ່ເກີນ ໜຶ່ງພັນຫົກຮ້ອຍ ຊີຊີ;
3. ມາດຕະຖານຄວາມປອດໄພ ແລະ ສິ່ງແວດລ້ອມ.

**ມາດຕາ 20 ການດັດສົມການນຳໃຊ້ຍານພາຫະນະທາງບົກ**

ກະຊວງໂຍທາທິການ ແລະ ຂົນສົ່ງ ປະສານສົມທົບກັບກະຊວງທີ່ກ່ຽວຂ້ອງ ຄົ້ນຄວ້າກ່ຽວກັບການນຳໃຊ້ຍານພາຫະນະທາງບົກ ເພື່ອຫຼຸດຜ່ອນຄວາມໜາແໜ້ນຂອງການຈະລາຈອນ ແລະ ບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລ້ວສະເໜີລັດຖະບານ ພິຈາລະນາດັດສົມການນຳໃຊ້ຍານພາຫະນະທາງບົກໃນແຕ່ລະໄລຍະ.

## ໝວດທີ 3
## ການນຳເຂົ້າ ຊິ້ນສ່ວນ ແລະ ອາໄຫຼ່

**ມາດຕາ 21 ການນຳເຂົ້າຊິ້ນສ່ວນຍານພາຫະນະທາງບົກ**

ຊິ້ນສ່ວນຍານພາຫະນະທາງບົກ ທີ່ອະນຸຍາດໃຫ້ນຳເຂົ້າ ມີ ສາມຮູບແບບ ດັ່ງນີ້:

1. ຊີເຄດີ (Completely Knocked Down-CKD) ແມ່ນ ການນຳເຂົ້າຊິ້ນສ່ວນຢູ່ໃນຮູບຮ່າງລັກສະນະທີ່ແກະ ແລະ ແຍກອອກຈາກກັນລະອຽດ ຊຶ່ງເປັນຊິ້ນສ່ວນພໍໃຜພໍມັນ, ເວັ້ນເສຍແຕ່ພາກສ່ວນຈັກ ຫຼື ໝໍ້ໄຟ ເພື່ອປະກອບຢູ່ໂຮງງານໃນ ສປປ ລາວ;

2. ໄອເຄດີ (Incompletely Knocked Down-IKD) ແມ່ນ ການນຳເຂົ້າຊິ້ນສ່ວນຢູ່ໃນຮູບຮ່າງລັກສະນະທີ່ແກະ ແລະ ແຍກອອກຈາກກັນແບບ (CKD) ເພື່ອປະກອບຢູ່ໂຮງງານແຕ່ບໍ່ຄົບຊຸດ ຊຶ່ງມີຊິ້ນສ່ວນ ແລະ ອາໄຫຼ່ຈຳນວນໜຶ່ງ ໄດ້ຮັບການຜະລິດ ແລະ ຕົບແຕ່ງຢູ່ພາຍໃນປະເທດ;

3. ເອັສເຄດີ (Semi Knocked Down-SKD) ແມ່ນ ການນຳເຂົ້າຊິ້ນສ່ວນທີ່ບໍ່ແມ່ນຊິ້ນສ່ວນດຽວຢູ່ໃນຮູບຮ່າງລັກສະນະທີ່ແກະ ແລະ ແຍກອອກຈາກກັນບໍ່ລະອຽດໂດຍປະມານ ຫ້າສິບສ່ວນຮ້ອຍ (50%) ຊຶ່ງເປັນຊິ້ນສ່ວນພໍໃຜພໍມັນ.

ຊິ້ນສ່ວນຍານພາຫະນະທາງບົກທີ່ນຳເຂົ້າ ຕ້ອງຮັບໃຊ້ສະເພາະໂຮງງານຜະລິດ ແລະ ປະກອບຍານພາຫະນະທາງບົກ ທີ່ໄດ້ຮັບອະນຸຍາດເທົ່ານັ້ນ.

**ມາດຕາ 22 ຄຸນນະພາບຊິ້ນສ່ວນຍານພາຫະນະທາງບົກ**

ຊິ້ນສ່ວນຍານພາຫະນະທາງບົກ ທີ່ຈະນຳເຂົ້າ ຕ້ອງເປັນຊິ້ນສ່ວນໃໝ່ ແລະ ມີໃບຢັ້ງຢືນຄຸນນະພາບຈາກໂຮງງານຜະລິດ, ໃນກໍລະນີບໍ່ມີສົນທິສັນຍາຮັບຮູ້ຊຶ່ງກັນ ແລະ ກັນ ກະຊວງໂຍທາທິການ ແລະ ຂົນສົ່ງ ຕ້ອງປະສານສົມທົບກັບກະຊວງທີ່ກ່ຽວຂ້ອງ ສາມາດຮຽກໃຫ້ໂຮງງານຜະລິດ ສົ່ງເອກະສານລາຍງານກ່ຽວກັບການທົດສອບ ແລະ/ຫຼື ກວດກາຂະບວນການຜະລິດຂອງໂຮງງານໃນປະເທດຕົ້ນທາງ ເພື່ອຮັບຮູ້ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຂະບວນການຜະລິດ (COP) ຈຶ່ງອະນຸຍາດໃຫ້ນຳເຂົ້າໄດ້.

**ມາດຕາ 23 ການນຳເຂົ້າອາໄຫຼ່ຍານພາຫະນະທາງບົກ**

ການນຳເຂົ້າອາໄຫຼ່ຍານພາຫະນະທາງບົກ ຕ້ອງປະຕິບັດ ດັ່ງນີ້:

1. ອາໄຫຼ່ໃໝ່ ຕ້ອງມີໃບຢັ້ງຢືນຄຸນນະພາບຈາກໂຮງງານຜະລິດ, ສຳລັບການນຳເຂົ້າ ຖັງລົດ, ຊາຊີ ແລະ ໜ່ວຍຈັກ ຕ້ອງໄດ້ຂໍອະນຸຍາດຈາກກະຊວງໂຍທາທິການ ແລະ ຂົນສົ່ງ;

2. ອາໄຫຼ່ທີ່ນຳໃຊ້ແລ້ວ ຕ້ອງໄດ້ຂໍອະນຸຍາດນຳເຂົ້າຈາກກະຊວງໂຍທາທິການ ແລະ ຂົນສົ່ງ.

# ພາກທີ III

# ການທົດສອບ ຍານພາຫະນະທາງບົກ ແລະ ຊິ້ນສ່ວນ ແລະ ການຢັ້ງຢືນຜົນການທົດສອບ

## ໝວດທີ 1

## ການທົດສອບ ຍານພາຫະນະທາງບົກ ແລະ ຊິ້ນສ່ວນ

**ມາດຕາ 24 ການທົດສອບຍານພາຫະນະທາງບົກ**

ຍານພາຫະນະທາງບົກທີ່ຜະລິດ ແລະ ປະກອບ ຢູ່ ສປປ ລາວ ກ່ອນຈຳໜ່າຍ ຕ້ອງໄດ້ຜ່ານການທົດສອບມາດຕະຖານເຕັກນິກທາງດ້ານ ຄວາມປອດໄພ ແລະ ສິ່ງແວດລ້ອມ ຈາກສູນທົດສອບທີ່ສາກົນຮັບຮູ້ ແລະ ຢັ້ງຢືນຜົນການທົດສອບຈາກກະຊວງໂຍທາທິການ ແລະ ຂົນສົ່ງ.

ລົດທີ່ຜະລິດ ແລະ ປະກອບ ຢູ່ ສປປ ລາວ ຕ້ອງໃສ່ເລກລະຫັດຖັງລົດ (Vehicle Identification Number "VIN") ຈຳນວນທັງໝົດ ສິບເຈັດຕົວ ຊຶ່ງຂຶ້ນຕົ້ນດ້ວຍຕົວອັກສອນສາກົນ ອາພີ (RP) ຕາມສາກົນກຳນົດ ISO 3779:2009.

**ມາດຕາ 25 ລາຍການທົດສອບຍານພາຫະນະທາງບົກ**

ການທົດສອບຍານພາຫະນະທາງບົກ ຕ້ອງປະຕິບັດຕາມລາຍການ ດັ່ງນີ້:

1. ໂຄງສ້າງ, ຂະໜາດ ແລະ ນ້ຳໜັກ;

2. ລະບົບການທຳງານ ເປັນຕົ້ນ ໜ່ວຍຈັກ, ຊ່ວງລ່າງ, ບັງຄັບລ້ຽວ, ໄຟສະຫວ່າງ ແລະ ໄຟເຕືອນອັນຕະລາຍ, ສັ່ນສະເທືອນ;

3. ລະບົບຄວາມປອດໄພ ເປັນຕົ້ນ ຫ້າມລໍ້, ຄັນເລັ່ງ, ຄວາມທ່ຽງຂອງລົດ, ສາຍຮັດນິລະໄພ ແລະ ຖົງລົມ;

4. ການປ່ອຍ ອາຍເສຍ ແລະ ສຽງ.

**ມາດຕາ 26 ການທົດສອບຊິ້ນສ່ວນ**

ຊິ້ນສ່ວນຍານພາຫະນະທາງບົກ ທີ່ຜະລິດຢູ່ພາຍໃນປະເທດ ໃຫ້ທົດສອບມາດຕະຖານເຕັກນິກ ດັ່ງນີ້:

1. ຊິ້ນສ່ວນ ລົດຈັກ ໃຫ້ທົດສອບ ໝໍ້ອຍຈັກ, ຖັງລົດ, ໝໍ້ອຍອັດແທກຄວາມໄວ, ແວ່ນ, ກະຈົກ, ຢາງຕີນລົດ, ຖັງບັນຈຸພະລັງງານ, ຂອບຢາງຕີນລົດ, ໝໍ້ໄຟລົດ ແລະ ທໍ່ອາຍເສຍ;

2. ຊິ້ນສ່ວນ ລົດເບົາ ແລະ ລົດຂົນສົ່ງ ໃຫ້ທົດສອບ ລະບົບໄຟສະຫວ່າງ ແລະ ໄຟເຕືອນອັນຕະລາຍ, ແວ່ນ, ກະຈົກ, ໝໍ້ອຍອັດແທກຄວາມໄວ, ຢາງຕີນ, ຂອບຢາງຕີນ, ໝໍ້ໄຟ, ທໍ່ອາຍເສຍ, ຖັງບັນຈຸພະລັງງານລົດ ແລະ ອື່ນໆ.

ສໍາລັບ ຊິ້ນສ່ວນ ລົດຈັກ, ລົດເບົາ ແລະ ລົດຂົນສົ່ງ ທີ່ນໍາໃຊ້ພະລັງງານໄຟຟ້າ ໃຫ້ທົດສອບ ມໍເຕີໄຟຟ້າ, ສາຍສາກ ແລະ ໝໍ້ໄຟ.

## ໝວດທີ 2
## ການຢັ້ງຢືນຜົນການທົດສອບ

**ມາດຕາ 27 ປະເພດການຢັ້ງຢືນຜົນການທົດສອບ**

ການຢັ້ງຢືນຜົນການທົດສອບ ມີ ສອງປະເພດ ດັ່ງນີ້:

1. ການຢັ້ງຢືນຜົນການທົດສອບຍານພາຫະນະທາງບົກ ວີທີເອ (Vehicle Type Approval-VTA) ແມ່ນ ຂັ້ນຕອນການຢັ້ງຢືນ ການອອກແບບ, ຮູບແບບລົດ ກ່ອນຜະລິດ ແລະ ປະກອບເປັນຄັນ ຕາມລະບຽບການຂອງສາກົນ;

2. ການຢັ້ງຢືນຜົນການທົດສອບຊິ້ນສ່ວນ ທີເອ (Type Approval-TA) ແມ່ນ ຂັ້ນຕອນການຢັ້ງຢືນການອອກແບບຊິ້ນສ່ວນ ເພື່ອປະກອບລົດເປັນຄັນ ຕາມລະບຽບການຂອງສາກົນ.

**ມາດຕາ 28 ການຢັ້ງຢືນຜົນການທົດສອບຍານພາຫະນະທາງບົກ ແລະ ຊິ້ນສ່ວນ**

ກະຊວງໂຍທາທິການ ແລະ ຂົນສົ່ງ ກ່ອນອອກໃບຢັ້ງຢືນຜົນການທົດສອບຍານພາຫະນະທາງບົກ ແລະ ຊິ້ນສ່ວນ ຕ້ອງກວດກາບົດລາຍງານຜົນການທົດສອບຈາກສູນທົດສອບ, ລົງກວດກາຂະບວນການຜະລິດຕົວຈິງຢູ່ໂຮງງານ ແລະ ປະເມີນຜົນ ຖ້າຫາກປະຕິບັດຖືກຕ້ອງຕາມມາດຕະຖານທີ່ກໍານົດແລ້ວ ຈຶ່ງອອກໃບຢັ້ງຢືນຜົນການທົດສອບໃຫ້.

# ພາກທີ IV
# ການຂຶ້ນທະບຽນ, ປ້າຍທະບຽນ ແລະ ການກວດກາເຕັກນິກ ຍານພາຫະນະທາງບົກ

## ໝວດທີ 1
## ການຂຶ້ນທະບຽນຍານພາຫະນະທາງບົກ

**ມາດຕາ 29 ການຂຶ້ນທະບຽນຍານພາຫະນະທາງບົກ**

ການຂຶ້ນທະບຽນຍານພາຫະນະທາງບົກ ແມ່ນ ຂະບວນການບັນທຶກຂໍ້ມູນຂອງຍານພາຫະນະທາງບົກເຂົ້າໃນລະບົບຖານຂໍ້ມູນ ເພື່ອຢັ້ງຢືນການເປັນກໍາມະສິດ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການຕິດຕາມກວດກາ.

ຍານພາຫະນະທາງບົກທຸກຊະນິດ ລວມທັງ ທາງລາກ ແລະ ເຄິ່ງທາງລາກ ທີ່ນຳໃຊ້ ຢູ່ ສປປ ລາວ ຕ້ອງຂຶ້ນທະບຽນຕາມແຕ່ລະປະເພດ ໃຫ້ຖືກຕ້ອງຕາມລະບຽບການ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ.

**ມາດຕາ 30 ເອກະສານປະກອບການຂຶ້ນທະບຽນຍານພາຫະນະທາງບົກ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂຶ້ນທະບຽນຍານພາຫະນະທາງບົກ ທຸກປະເພດ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຂຶ້ນທະບຽນ;
2. ສຳເນົາຖ່າຍ ໃບສຳມະໂນຄົວ ຫຼື ບັດປະຈຳຕົວ, ຂໍ້ຕົກລົງສ້າງຕັ້ງ ຫຼື ໃບທະບຽນ ວິສາຫະກິດ;
3. ໃບຢັ້ງຢືນ ຊື້ ຂາຍ;
4. ໃບອະນຸຍາດນຳສິນຄ້າເຂົ້າຈາກຂະແໜງການອຸດສາຫະກຳ ແລະ ການຄ້າ;
5. ໃບອະນຸຍາດນຳເຂົ້າທາງດ້ານເຕັກນິກຈາກກະຊວງໂຍທາທິການ ແລະ ຂົນສົ່ງ;
6. ໃບແຈ້ງພາສີ, ໃບຢັ້ງຢືນການເສຍພາສີ, ເວັ້ນເສຍແຕ່ມີການຍົກເວັ້ນ ພາສີ, ສ່ວຍສາອາກອນ ຕາມການຕົກລົງຂອງລັດຖະບານ.

ສຳລັບ ລົດບໍລິຫານຂອງລັດ ຕ້ອງມີໃບສະເໜີຂຶ້ນບັນຊີຍານພາຫະນະທາງບົກຈາກຂະແໜງການ ການເງິນ, ສ່ວນລົດສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ ແລະ ສາກົນ ຕ້ອງມີໃບສະເໜີຈາກກະຊວງການຕ່າງ ປະເທດ.

**ມາດຕາ 31 ປະເພດການຂຶ້ນທະບຽນຍານພາຫະນະທາງບົກ**

ການຂຶ້ນທະບຽນຍານພາຫະນະທາງບົກ ມີ ແປດປະເພດ ດັ່ງນີ້:

1. ບໍລິຫານຂອງລັດ;
2. ເອກະຊົນລາວ;
3. ເອກະຊົນຕ່າງດ້າວ;
4. ທຸລະກິດ ຮ້ອຍສ່ວນຮ້ອຍ 100%;
5. ທຸລະກິດ ໜຶ່ງສ່ວນຮ້ອຍ 1%;
6. ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ, ສາກົນປະຈຳ ຢູ່ ສປປ ລາວ;
7. ຊົ່ວຄາວ;
8. ກົນຈັກໜັກ ແລະ ກົນຈັກກະສິກຳ.

ສຳລັບ ການຂຶ້ນທະບຽນຍານພາຫະນະທາງບົກແຕ່ລະປະເພດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 32 ຮູບແບບການຂຶ້ນທະບຽນຍານພາຫະນະທາງບົກ**

ການຂຶ້ນທະບຽນຍານພາຫະນະທາງບົກ ມີ ສອງຮູບແບບ ດັ່ງນີ້:

1. ການຂຶ້ນທະບຽນຍານພາຫະນະທາງບົກແບບຖາວອນ;
2. ການຂຶ້ນທະບຽນຍານພາຫະນະທາງບົກແບບຊົ່ວຄາວ.

**ມາດຕາ 33 ການຂຶ້ນທະບຽນຍານພາຫະນະທາງບົກແບບຖາວອນ**

ການຂຶ້ນທະບຽນຍານພາຫະນະທາງບົກແບບຖາວອນ ແມ່ນ ການຂຶ້ນທະບຽນໃຫ້ຍານພາຫະນະທາງບົກປະເພດ ບໍລິຫານຂອງລັດ, ເອກະຊົນລາວ, ເອກະຊົນຕ່າງດ້າວ, ທຸລະກິດ ຮ້ອຍສ່ວນຮ້ອຍ 100%, ທຸລະກິດ ໜຶ່ງສ່ວນຮ້ອຍ 1% ແລະ ກົນຈັກໜັກ ແລະ ກົນຈັກກະສິກຳ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂຶ້ນທະບຽນຍານພາຫະນະທາງບົກແບບຖາວອນ ຕ້ອງຍື່ນຄຳຮ້ອງ ພ້ອມດ້ວຍເອກະສານຄົບຊຸດ ຕໍ່ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ເພື່ອຂຶ້ນທະບຽນເປັນກຳມະສິດຂອງຕົນ.

ໃບທະບຽນຍານພາຫະນະທາງບົກ ມີອາຍຸການນຳໃຊ້ ຫ້າປີ ແລະ ສາມາດຕໍ່ໄດ້.

ໃນກໍລະນີ ຍານພາຫະນະທາງບົກທີ່ໄດ້ຂຶ້ນທະບຽນແລ້ວ ຫາກບໍ່ມາຕໍ່ທະບຽນພາຍໃນເວລາ ສາມປີ ນັບແຕ່ວັນໃບທະບຽນໝົດອາຍຸນັ້ນ, ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ຈະລຶບລ້າງທະບຽນຍານພາຫະນະດັ່ງກ່າວ ອອກຈາກລະບົບບັນຊີການຂຶ້ນທະບຽນ.

ສຳລັບ ທະບຽນຍານພາຫະນະທາງບົກທີ່ຖືກລຶບລ້າງອອກຈາກລະບົບບັນຊີການຂຶ້ນທະບຽນ ຖ້າຫາກມີຄວາມຕ້ອງການຂຶ້ນທະບຽນຄືນໃໝ່ ຕ້ອງເຮັດໜັງສືສະເໜີຫາຂະແໜງການໂຍທາທິການ ແລະ ຂົນສົ່ງ ບ່ອນທີ່ຍານພາຫະນະທາງບົກໄດ້ຂຶ້ນທະບຽນ ພິຈາລະນາ, ກວດກາຄວາມຖືກຕ້ອງຂອງເອກະສານ, ເສຍຄ່າປັບໃໝ ແລະ ຄ່າທຳນຽມອື່ນຕາມລະບຽບການ.

**ມາດຕາ 34 ການຂຶ້ນທະບຽນຍານພາຫະນະທາງບົກແບບຊົ່ວຄາວ**

ການຂຶ້ນທະບຽນຍານພາຫະນະທາງບົກແບບຊົ່ວຄາວ ແມ່ນ ການຂຶ້ນທະບຽນໃຫ້ຍານພາຫະນະທາງບົກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີຈຸດປະສົງນຳລົດເຂົ້າມານຳໃຊ້ໃນໂຄງການທີ່ມີອາຍຸ ໜຶ່ງປີ ຂຶ້ນໄປ ຊຶ່ງໄດ້ຮັບອະນຸມັດຈາກລັດຖະບານ ຕ້ອງຂຶ້ນທະບຽນຍານພາຫະນະທາງບົກແບບຊົ່ວຄາວນຳກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ຊຶ່ງມີອາຍຸການນຳໃຊ້ທະບຽນໜຶ່ງປີ ແລະ ສາມາດຕໍ່ໄດ້.

ສຳນັກງານຜູ້ຕາງໜ້າຂອງ ຕ່າງປະເທດ, ສາກົນ ປະຈຳຢູ່ ສປປ ລາວ ທີ່ມີຈຸດປະສົງນຳຍານພາຫະນະທາງບົກເຂົ້າມານຳໃຊ້ໃນວຽກງານຂອງຕົນ ຕ້ອງຂຶ້ນທະບຽນຍານພາຫະນະທາງບົກແບບຊົ່ວຄາວ ນຳກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ຊຶ່ງມີອາຍຸການນຳໃຊ້ທະບຽນ ສອງປີ ແລະ ສາມາດຕໍ່ໄດ້ຕາມລະບຽບການຂອງກະຊວງການຕ່າງປະເທດ ກຳນົດ.

**ມາດຕາ 35 ການຂຶ້ນທະບຽນຍານພາຫະນະທາງບົກຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ຍານພາຫະນະທາງບົກ ທີ່ນຳໃຊ້ເຂົ້າໃນວຽກງານວິຊາສະເພາະຈຳເພາະ ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ຂຶ້ນທະບຽນ ແລະ ຕິດປ້າຍທະບຽນນຳກະຊວງປ້ອງກັນປະເທດ ຫຼື ກະຊວງປ້ອງກັນຄວາມສະຫງົບ.

ສຳລັບ ຍານພາຫະນະທາງບົກທີ່ຮັບໃຊ້ວຽກງານບໍລິຫານ ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງຂຶ້ນທະບຽນ ແລະ ຕິດປ້າຍທະບຽນບໍລິຫານຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 36 ການຄຸ້ມຄອງສຳນວນເອກະສານຍານພາຫະນະທາງບົກ**

ສຳນວນເອກະສານຍານພາຫະນະທາງບົກ ທີ່ໄດ້ຂຶ້ນທະບຽນແລ້ວ ຕ້ອງເກັບຮັກສາໄວ້ ພາຍໃນເວລາສິບປີ, ຫຼັງຈາກນັ້ນ ສາມາດທຳລາຍໄດ້ ແຕ່ຂໍ້ມູນເອກະສານຍານພາຫະນະທາງບົກ ຕ້ອງເກັບຮັກສາໄວ້ໃນລະບົບຖານຂໍ້ມູນເອກະສານເອເລັກໂຕຣນິກ.

**ມາດຕາ 37 ຖານຂໍ້ມູນການຂຶ້ນທະບຽນຍານພາຫະນະທາງບົກ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບສ້າງຖານຂໍ້ມູນການຂຶ້ນທະບຽນຍານພາຫະນະທາງບົກດ້ວຍລະບົບເອເລັກໂຕຣນິກ ເພື່ອເກັບກຳ, ສັງລວມ ຂໍ້ມູນກ່ຽວກັບຍານພາຫະນະທາງບົກທີ່ໄດ້ນຳມາຂຶ້ນທະບຽນ ຊຶ່ງເປັນເຄື່ອງມືພື້ນຖານທີ່ຈຳເປັນໃນການຄຸ້ມຄອງຍານພາຫະນະທາງບົກ ໃຫ້ຖືກຕ້ອງ ແລະ ຊັດເຈນ, ນຳໃຊ້ເຂົ້າໃນການ ຄົ້ນຄວ້າ, ວາງແຜນ, ວິໄຈການພັດທະນາເສດຖະກິດ-ສັງຄົມ.

ຖານຂໍ້ມູນການຂຶ້ນທະບຽນຍານພາຫະນະທາງບົກມີເປົ້າໝາຍນຳໃຊ້ ເພື່ອ:

1. ຄວບຄຸມ, ຕິດຕາມ ກວດກາ ການເຄື່ອນໄຫວຍານພາຫະນະທາງບົກຕາມທາງຫຼວງ, ການຈະລາຈອນໃນຕົວເມືອງ, ລະຫວ່າງປະເທດ ແລະ ຜ່ານແດນ;
2. ເກັບ ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ກ່ຽວກັບຍານພາຫະນະທາງບົກ;
3. ຄຸ້ມຄອງມາດຕະຖານເຕັກນິກຍານພາຫະນະທາງບົກ;
4. ກວດກາເຕັກນິກລົດ.

## ໝວດທີ 2
## ປ້າຍທະບຽນຍານພາຫະນະທາງບົກ

**ມາດຕາ 38 ມາດຕະຖານປ້າຍທະບຽນຍານພາຫະນະທາງບົກ**

ປ້າຍທະບຽນຍານພາຫະນະທາງບົກແຕ່ລະປະເພດ ຕ້ອງມີມາດຕະຖານເຕັກນິກສະເພາະ ຊຶ່ງປະກອບດ້ວຍ ລັກສະນະ, ຂະໜາດ, ສີ, ຮູບແບບ ຕົວອັກສອນ, ຕົວເລກ, ລະຫັດ ແລະ ເຄື່ອງໝາຍ ຕາມການກຳນົດຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 39 ການຜະລິດປ້າຍທະບຽນຍານພາຫະນະທາງບົກ**

ກະຊວງປ້ອງກັນຄວາມສະຫງົບ ຮັບຜິດຊອບຜະລິດປ້າຍທະບຽນຍານພາຫະນະທາງບົກ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຜະລິດ;
2. ຖືກຕ້ອງຕາມມາດຕະຖານປ້າຍທະບຽນຍານພາຫະນະ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງກຳນົດ;
3. ຮັບປະກັນຄຸນນະພາບ, ສາມາດກວດສອບ ແລະ ກວດກາໄດ້ຢ່າງທັນການ;
4. ຮັບປະກັນການແຈກຢາຍໃຫ້ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ເພື່ອເຮັດໃຫ້ການຕິດປ້າຍ ຖືກຕ້ອງ, ສະດວກ ແລະ ວ່ອງໄວ.

**ມາດຕາ 40 ການຕິດປ້າຍທະບຽນຍານພາຫະນະທາງບົກ**

ປ້າຍທະບຽນຍານພາຫະນະທາງບົກ ຕ້ອງຕິດໃສ່ໂຄງສ້າງຖັງລົດບ່ອນໂຮງງານຜະລິດກຳນົດ ໂດຍບໍ່ໃຫ້ມີວັດຖຸອື່ນມາປິດບັງ ຊຶ່ງເປັນສາເຫດເຮັດໃຫ້ບໍ່ສາມາດແນມເຫັນຊັດເຈນ.

ການຕິດປ້າຍທະບຽນຍານພາຫະນະທາງບົກ ໃຫ້ດຳເນີນຢູ່ໜ່ວຍງານຕິດປ້າຍ ຂອງຂະແໜງການປ້ອງກັນຄວາມສະຫງົບ ທີ່ປະຈຳຢູ່ກອງທະບຽນຍານພາຫະນະທາງບົກທີ່ກ່ຽວຂ້ອງ.

## ໝວດທີ 3
## ການກວດກາເຕັກນິກຍານພາຫະນະທາງບົກ

**ມາດຕາ 41 ຮອບວຽນການກວດກາເຕັກນິກຍານພາຫະນະທາງບົກ**

ການກວດກາເຕັກນິກຍານພາຫະນະທາງບົກ ໃຫ້ດຳເນີນຢູ່ສູນກວດເຕັກນິກ ແລະ ປະຕິບັດຕາມຮອບວຽນ ດັ່ງນີ້:

1. ລົດຈັກ ແລະ ລົດເບົາ ກ່ອນຂຶ້ນທະບຽນ ຕ້ອງຜ່ານການຢັ້ງຢືນເຕັກນິກ ໃຫ້ຖືກຕ້ອງຕາມມາດຕະຖານທີ່ກະຊວງໂຍທາທິການ ແລະ ຂົນສົ່ງກຳນົດ. ສຳລັບລົດໃໝ່ ມີກຳນົດນຳໃຊ້ ສອງປີ, ຫຼັງຈາກນັ້ນ ໃຫ້ກວດກາເຕັກນິກຄືນທຸກປີ. ສຳລັບ ລົດນຳເຂົ້າທີ່ນຳໃຊ້ແລ້ວ ໃຫ້ກວດກາເຕັກນິກທຸກປີ;
2. ລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າກ່ອນຂຶ້ນທະບຽນ ຕ້ອງຜ່ານການຢັ້ງຢືນເຕັກນິກ ໃຫ້ຖືກຕ້ອງຕາມມາດຕະຖານ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງກຳນົດ. ສຳລັບ ລົດໃໝ່ ມີກຳນົດນຳໃຊ້ ໜຶ່ງປີ, ຫຼັງຈາກນັ້ນ ໃຫ້ກວດກາເຕັກນິກຄືນທຸກ ຫົກເດືອນ. ສຳລັບລົດນຳເຂົ້າທີ່ນຳໃຊ້ແລ້ວ ໃຫ້ກວດກາເຕັກນິກທຸກ ຫົກເດືອນ.

ສູນກວດກາເຕັກນິກ ຕ້ອງມີຄວາມຮັບຜິດຊອບຕໍ່ຜົນການກວດກາເຕັກນິກຍານພາຫະນະທາງບົກ ທີ່ໄດ້ຜ່ານການກວດກາ ແລະ ຢັ້ງຢືນຈາກສູນຂອງຕົນ.

**ມາດຕາ 42 ການກວດກາເຕັກນິກຍານພາຫະນະທາງບົກ**

ການກວດກາເຕັກນິກຍານພາຫະນະທາງບົກ ໃຫ້ກວດກາລາຍການ ຕົ້ນຕໍ ດັ່ງນີ້:

1. ໂຄງສ້າງ, ຂະໜາດ ແລະ ນ້ຳໜັກ;
2. ລະບົບບັງຄັບລ້ຽວ;
3. ລະບົບ ຫ້າມລໍ້ລົດ, ຄວາມທ່ຽງສູນລໍ້, ຄວາມໄວ;
4. ລະບົບຂັບເຄື່ອນ (ຢາງ ແລະ ລໍ້);
5. ລະບົບເຄື່ອງຈັກ;
6. ທາດອາຍຄາບອນໂມນ໋ອກໄຊ້ (CO), ໄຮໂດຣຄາບອນ (HC), ສຽງຈາກທໍ່ອາຍເສຍ;
7. ລະບົບ ໄຟຫ້າມລໍ້, ໄຟລີ່, ໄຟຕາ, ແກລົດ, ໄຟເສີມ, ເຄື່ອງສຽງ;
8. ລະບົບກວດກາຄວາມປອດໄພ ແວ່ນຂ້າງ ຊ້າຍ, ຂວາ ແລະ ຫຼັງ, ສາຍຮັດນິລະໄພ.

ສຳລັບ ລາຍລະອຽດກ່ຽວກັບມາດຕະຖານເຕັກນິກ, ຂັ້ນຕອນ ແລະ ວິທີການກວດກາເຕັກນິກຍານພາຫະນະທາງບົກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 43 ການຮຽກຄືນຍານພາຫະນະທີ່ບໍ່ໄດ້ມາດຕະຖານ**

ຍານພາຫະນະທີ່ເກີດຂໍ້ບົກພ່ອງທາງດ້ານມາດຕະຖານເຕັກນິກ ໃນລະບົບໃດໜຶ່ງຈາກການນຳໃຊ້ ທີ່ຜ່ານການກວດກາ, ພິສູດ ແລະ ມີຫຼັກຖານຢັ້ງຢືນຈາກວິສະວະກອນແລ້ວ ຜູ້ຜະລິດຕ້ອງຮຽກຄືນ ຈຳນວນຍານພາຫະນະທີ່ຢູ່ໃນສາຍການຜະລິດຂອງຮຸ່ນທີ່ເກີດຂໍ້ບົກພ່ອງນັ້ນ ໂດຍຜ່ານຕົວແທນຈຳໜ່າຍຂອງຕົນ ພ້ອມທັງມີຄວາມຮັບຜິດຊອບໃນການສ້ອມແປງ, ປ່ຽນຖ່າຍ, ປ່ຽນແທນ ໃຫ້ແກ່ເຈົ້າຂອງຍານພາຫະນະ.

## ພາກທີ V
## ການດັດແປງຮູບຮ່າງ ແລະ ເຕັກນິກ ຍານພາຫະນະທາງບົກ

**ມາດຕາ 44 ການດັດແປງຮູບຮ່າງ ແລະ ເຕັກນິກ ຍານພາຫະນະທາງບົກ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດັດແປງຮູບຮ່າງ ແລະ ເຕັກນິກ ຍານພາຫະນະທາງບົກທີ່ໄດ້ຂຶ້ນທະບຽນແລ້ວ ຕ້ອງຍື່ນຄໍາຮ້ອງຕາມແບບພິມ ພ້ອມດ້ວຍໃບທະບຽນຍານພາຫະນະ ແລະ ປຶ້ມຕິດຕາມການຂຶ້ນທະບຽນ ຕໍ່ຂະແໜງການໂຍທາທິການ ແລະ ຂົນສົ່ງ ພິຈາລະນາ ພາຍໃນເວລາ ຫ້າວັນລັດຖະການ.

ພາຍຫຼັງໄດ້ຮັບອະນຸຍາດຈາກຂະແໜງການໂຍທາທິການ ແລະ ຂົນສົ່ງແລ້ວ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ນໍາເອົາລົດໄປດັດແປງຮູບຮ່າງ ຫຼື ເຕັກນິກຢູ່ອູ່ສ້ອມແປງທີ່ໄດ້ມາດຕະຖານ ຫຼື ສະຖານທີ່ໄດ້ຮັບອະນຸຍາດ;
2. ນໍາລົດມາກວດກາຄືນ ພາຍຫຼັງມີການດັດແປງຮູບຮ່າງ ຫຼື ເຕັກນິກ ສໍາເລັດແລ້ວ;
3. ນໍາລົດໄປຂຶ້ນທະບຽນໃໝ່.

**ມາດຕາ 45 ການດັດແປງເພື່ອຟື້ນຟູສະພາບຂອງຍານພາຫະນະທາງບົກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຟື້ນຟູຍານພາຫະນະທາງບົກ ເກົ່າແກ່, ບູຮານ ຫຼື ເປ່ເພເສຍຫາຍ ຊຶ່ງຕ້ອງໄດ້ປ່ຽນ ໝ່ວຍຈັກ ແລະ/ຫຼື ຖັງລົດຕ້ອງຍື່ນຄໍາຮ້ອງຕາມແບບພິມ ພ້ອມດ້ວຍໃບທະບຽນຍານພາຫະນະ ຫຼື ໃບຢັ້ງຢືນຈາກອົງການປົກຄອງບ້ານ ຕໍ່ຂະແໜງການໂຍທາທິການ ແລະ ຂົນສົ່ງພິຈາລະນາ ພາຍໃນເວລາ ຫ້າວັນ ລັດຖະການ.

ພາຍຫຼັງໄດ້ຮັບອະນຸຍາດແລ້ວ ໃນກໍລະນີຍານພາຫະນະທາງບົກນັ້ນ ຫາກບໍ່ມີ ເລກຈັກ ຫຼື ເລກຖັງ ຫຼື ມີຕົວເລກບໍ່ຈະແຈ້ງ ຕ້ອງໄດ້ສັບ ເລກຈັກ ຫຼື ເລກຖັງໃໝ່ ແລ້ວນໍາໄປຂຶ້ນທະບຽນໃໝ່ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້.

ຍານພາຫະນະທາງບົກ ທີ່ບໍ່ສາມາດສ້ອມແປງ ແລະ ຟື້ນຟູໄດ້ ຕ້ອງຖອນທະບຽນ.

## ພາກທີ VI
## ການ ຊື້ ຂາຍ, ມອບ, ຢຸດນໍາໃຊ້ ແລະ ການສູນຫາຍ
### ໝວດທີ 1
### ການ ຊື້ ຂາຍ ແລະ ມອບ ຍານພາຫະນະທາງບົກ

**ມາດຕາ 46 ເອກະສານປະກອບການ ຊື້ ຂາຍ ຍານພາຫະນະທາງບົກ**

ການ ຊື້ ຂາຍ ຍານພາຫະນະທາງບົກທີ່ໄດ້ຂຶ້ນທະບຽນແລ້ວ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຢັ້ງຢືນການ ຊື້ ຂາຍ;
2. ໃບຢັ້ງຢືນທີ່ຢູ່, ສໍາເນົາຖ່າຍ ສໍາມະໂນຄົວ ຫຼື ບັດປະຈໍາຕົວຂອງ ຜູ້ຊື້ ແລະ ຜູ້ຂາຍ;
3. ໃບຮັບປະກັນຂອງຜູ້ຂາຍ ໂດຍຢັ້ງຢືນ ຈາກອົງການປົກຄອງບ້ານ;
4. ໃບທະບຽນຍານພາຫະນະທາງບົກສະບັບຕົ້ນ;
5. ປຶ້ມຕິດຕາມການຂຶ້ນທະບຽນຍານພາຫະນະທາງບົກ.

**ມາດຕາ 47 ເອກະສານປະກອບການມອບຍານພາຫະນະທາງບົກ**

ການມອບຍານພາຫະນະທາງບົກ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບມອບກຳມະສິດທີ່ມີການຢັ້ງຢືນຈາກອົງການປົກຄອງບ້ານ;
2. ໃບຢັ້ງຢືນທີ່ຢູ່, ສຳເນົາຖ່າຍ ສຳມະໂນຄົວ ຫຼື ບັດປະຈຳຕົວ ຂອງຜູ້ມອບ ແລະ ຜູ້ຮັບ;
3. ໃບຮັບປະກັນຂອງຜູ້ມອບ ໂດຍຢັ້ງຢືນຈາກອົງການປົກຄອງບ້ານ;
4. ໃບທະບຽນຍານພາຫະນະທາງບົກສະບັບຕົ້ນ;
5. ປຶ້ມຕິດຕາມການຂຶ້ນທະບຽນຍານພາຫະນະທາງບົກ.

**ມາດຕາ 48 ການຈົດທະບຽນໂອນກຳມະສິດ**

ການຊື້ ຂາຍ ແລະ ການມອບຍານພາຫະນະນັ້ນ ຕ້ອງໄດ້ຈົດທະບຽນໂອນກຳມະສິດຢູ່ ກອງທະບຽນຍານພາຫະນະທາງບົກທີ່ກ່ຽວຂ້ອງ ພາຍໃນເວລາ ສາມສິບວັນ ນັບແຕ່ວັນຊື້ ຂາຍ ຫຼື ມອບເປັນຕົ້ນໄປ ໂດຍຮັກສາປ້າຍທະບຽນເດີມໄວ້.

ການຈົດທະບຽນໂອນກຳມະສິດນັ້ນ ຕ້ອງໄດ້ເອົາຍານພາຫະນະໄປກວດກາຕົວຈິງ ແລະ ເສຍຄ່າທຳນຽມ ແລະ ບໍລິການຕ່າງໆຕາມລະບຽບການ.

ສຳລັບ ການຈົດທະບຽນໂອນກຳມະສິດຍານພາຫະນະບໍລິຫານຂອງລັດ ໃຫ້ປະຕິບັດຕາມລະບຽບການສະເພາະ.

**ມາດຕາ 49 ການຍົກຍ້າຍຍານພາຫະນະທາງບົກ**

ການຍົກຍ້າຍຍານພາຫະນະທາງບົກ ແມ່ນ ການຍົກຍ້າຍຍານພາຫະນະພ້ອມດ້ວຍເອກະສານ ທີ່ໄດ້ຂຶ້ນທະບຽນຢູ່ແຂວງໜຶ່ງ ໄປຂຶ້ນທະບຽນເພື່ອນຳໃຊ້ຢູ່ແຂວງອື່ນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຍົກຍ້າຍຍານພາຫະນະທາງບົກ ຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ການແຈ້ງຍົກຍ້າຍຍານພາຫະນະ ອອກ

1) ຍື່ນຄຳຮ້ອງຂໍຍົກຍ້າຍອອກຕາມແບບພິມ ພ້ອມດ້ວຍ ໃບທະບຽນຍານພາຫະນະ, ປຶ້ມຕິດຕາມການຂຶ້ນທະບຽນຍານພາຫະນະ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ສັນຍາ ຊື້ ຂາຍ, ໃບມອບກຳມະສິດ, ຂໍ້ຕົກລົງຍົກຍ້າຍຍານພາຫະນະ ໃນກໍລະນີ ລົດບໍລິຫານຂອງລັດ;

2) ເສຍ ຄ່າທຳນຽມ ແລະ ຄ່າບໍລິການ, ກອງທະບຽນຍານພາຫະນະທາງບົກ ຕ້ອງອອກໃບຍົກຍ້າຍ ພ້ອມທັງເອກະສານຫຼັກຖານຂອງລົດ ແລ້ວລຶບລ້າງເອກະສານຍານພາຫະນະຄັນດັ່ງກ່າວ ອອກຈາກລະບົບການຂຶ້ນທະບຽນຢູ່ແຂວງຕົ້ນທາງ.

ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ຕ້ອງພິຈາລະນາອອກໃບຍົກຍ້າຍຍານພາຫະນະທາງບົກ ພາຍໃນເວລາ ຫ້າວັນ ລັດຖະການ.

2. ການແຈ້ງຍົກຍ້າຍຍານພາຫະນະ ເຂົ້າ

1) ຍື່ນຄຳຮ້ອງຂໍຍົກຍ້າຍເຂົ້າຕາມແບບພິມ ພ້ອມດ້ວຍເອກະສານຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1) ແລະ ຂໍ້ 2) ຂອງການແຈ້ງຍົກຍ້າຍຍານພາຫະນະ ອອກ;

2) ນຳລົດໄປກວດກາຕົວຈິງ ສົມທຽບກັບເອກະສານເດີມ;

3) ປົດປ້າຍທະບຽນເກົ່າ ພ້ອມທັງທຳລາຍຖິ້ມ ແລ້ວຕິດປ້າຍທະບຽນໃໝ່;

4) ເສຍ ຄ່າທຳນຽມ ແລະ ບໍລິການ.

ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ຕ້ອງບັນທຶກຂໍ້ມູນຍານພາຫະນະດັ່ງກ່າວ ເຂົ້າໃນລະບົບການຂຶ້ນທະບຽນຍານພາຫະນະ.

## ໝວດທີ 2
## ການຢຸດນຳໃຊ້ ແລະ ການສູນຫາຍ ຍານພາຫະນະທາງບົກ

**ມາດຕາ 50 ການຢຸດນຳໃຊ້ຍານພາຫະນະທາງບົກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຢຸດນຳໃຊ້ຍານພາຫະນະທາງບົກ ຕ້ອງແຈ້ງຂໍຢຸດນຳໃຊ້ຍານພາຫະນະຕໍ່ກອງທະບຽນຍານພາຫະນະທາງບົກທີ່ກ່ຽວຂ້ອງ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ຍື່ນຄຳຮ້ອງແຈ້ງເຫດຜົນຂໍຢຸດນຳໃຊ້ຍານພາຫະນະ;
2. ສົ່ງປຶ້ມຕິດຕາມການຂຶ້ນທະບຽນ, ໃບທະບຽນ ແລະ ປ້າຍທະບຽນ ຍານພາຫະນະ;
3. ອອກໃບຢັ້ງຢືນການຢຸດນຳໃຊ້ຍານພາຫະນະດັ່ງກ່າວ ຢ່າງຖາວອນ.

**ມາດຕາ 51 ການສູນຫາຍຍານພາຫະນະທາງບົກ**

ໃນກໍລະນີຍານພາຫະນະທາງບົກສູນຫາຍ ເຈົ້າຂອງຍານພາຫະນະ ຕ້ອງແຈ້ງເຈົ້າໜ້າທີ່ຕຳຫຼວດ ພ້ອມກັນນັ້ນກໍໃຫ້ປະກອບຄຳຮ້ອງຕາມແບບພິມທີ່ຂະແໜງການໂຍທາທິການ ແລະ ຂົນສົ່ງກຳນົດ ໂດຍເຊັນຢັ້ງຢືນຈາກອົງການປົກຄອງບ້ານ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລ້ວຍື່ນຕໍ່ກອງທະບຽນຍານພາຫະນະທາງບົກທີ່ກ່ຽວຂ້ອງ ເພື່ອບັນທຶກການສູນຫາຍຂອງຍານພາຫະນະ ແລະ ບໍ່ອອກໃບທະບຽນຍານພາຫະນະໃໝ່.

**ມາດຕາ 52 ການເສຍຫາຍ ຫຼື ສູນຫາຍປຶ້ມຕິດຕາມການຂຶ້ນທະບຽນ, ໃບທະບຽນ ແລະ ປ້າຍທະບຽນ ຍານພາຫະນະທາງບົກ**

ໃນກໍລະນີ ປຶ້ມຕິດຕາມການຂຶ້ນທະບຽນ ແລະ ໃບທະບຽນ ຍານພາຫະນະທາງບົກເສຍຫາຍ ແລະ/ຫຼື ສູນຫາຍ ເຈົ້າຂອງຍານພາຫະນະທາງບົກ ຕ້ອງແຈ້ງ ແລະ ປະກອບຄຳຮ້ອງຕາມແບບພິມ ທີ່ຂະແໜງການໂຍທາທິການ ແລະ ຂົນສົ່ງ ກຳນົດ ໂດຍເຊັນຢັ້ງຢືນຈາກອົງການປົກຄອງບ້ານ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລ້ວຍື່ນຕໍ່ກອງທະບຽນຍານພາຫະນະທາງບົກທີ່ກ່ຽວຂ້ອງ ພ້ອມທັງນຳເອົາຍານພາຫະນະໄປກວດກາຕົວຈິງ ຖ້າເຫັນວ່າຖືກຕ້ອງຄົບຖ້ວນແລ້ວ ກອງທະບຽນຍານພາຫະນະທາງບົກທີ່ກ່ຽວຂ້ອງນັ້ນ ຕ້ອງອອກປຶ້ມຕິດຕາມການຂຶ້ນທະບຽນ ແລະ ໃບທະບຽນໃໝ່.

ໃນກໍລະນີ ປ້າຍທະບຽນຍານພາຫະນະທາງບົກເສຍຫາຍ ແລະ/ຫຼື ສູນຫາຍ ເຈົ້າຂອງຍານພາຫະນະທາງບົກ ຕ້ອງຍື່ນຄຳຮ້ອງໂດຍມີການເຊັນຢັ້ງຢືນຈາກອົງການປົກຄອງບ້ານ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ ພ້ອມດ້ວຍປຶ້ມຕິດຕາມການຂຶ້ນທະບຽນ ແລະ ໃບທະບຽນຍານພາຫະນະທາງບົກ ແລ້ວຍື່ນຕໍ່ໜ່ວຍງານຕິດປ້າຍຍານພາຫະນະ ທີ່ປະຈຳຢູ່ກອງທະບຽນຍານພາຫະນະທາງບົກທີ່ກ່ຽວຂ້ອງ ພ້ອມທັງນຳເອົາຍານພາຫະນະໄປກວດກາຕົວຈິງ ຖ້າເຫັນວ່າຖືກຕ້ອງຄົບຖ້ວນ ໜ່ວຍງານດັ່ງກ່າວ ຕ້ອງຜະລິດ ແລະ ຕິດປ້າຍທະບຽນໃໝ່ໃຫ້.

# ພາກທີ VII
# ກອງທະບຽນຍານພາຫະນະທາງບົກ

**ມາດຕາ 53 ກອງທະບຽນຍານພາຫະນະທາງບົກ**

ກອງທະບຽນຍານພາຫະນະທາງບົກ ມີ ສາມຂັ້ນ ດັ່ງນີ້:

1. ກອງທະບຽນກາງຍານພາຫະນະທາງບົກ;
2. ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ;
3. ກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 54 ກອງທະບຽນກາງຍານພາຫະນະທາງບົກ**

ກອງທະບຽນກາງຍານພາຫະນະທາງບົກ ແມ່ນ ຫົວໜ່ວຍວິຊາການລະດັບສອງ ເປັນກົງຈັກໜຶ່ງຂອງກະຊວງໂຍທາທິການ ແລະ ຂົນສົ່ງ ມີພາລະບົດບາດເປັນເສນາທິການໃນການຄຸ້ມຄອງວຽກງານຍານພາຫະນະທາງບົກ ໃນຂອບເຂດທົ່ວປະເທດ ພ້ອມທັງຮັບປະກັນຄວາມ ສະດວກ, ວ່ອງໄວ, ໂປ່ງໃສ, ເປັນລະບຽບຮຽບຮ້ອຍ ແລະ ຖືກຕ້ອງ ຕາມມາດຕະຖານເຕັກນິກ.

**ມາດຕາ 55 ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ**

ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ແມ່ນ ຫົວໜ່ວຍວິຊາການ ທີ່ຂຶ້ນກັບພະແນກໂຍທາທິການ ແລະ ຂົນສົ່ງ, ສ່ວນດ້ານວິຊາການຂຶ້ນກັບກອງທະບຽນກາງຍານພາຫະນະທາງບົກ ມີພາລະບົດບາດໃນການຂຶ້ນທະບຽນ, ພິມໃບທະບຽນ ແລະ ກວດກາເຕັກນິກ ຍານພາຫະນະທາງບົກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງຮັບປະກັນການບໍລິການໃຫ້ມີຄວາມ ສະດວກ, ວ່ອງໄວ, ໂປ່ງໃສ, ເປັນລະບຽບຮຽບຮ້ອຍ ແລະ ຖືກຕ້ອງ ຕາມມາດຕະຖານເຕັກນິກ.

**ມາດຕາ 56 ກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ**

ກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ ແມ່ນ ຫົວໜ່ວຍວິຊາການທີ່ຂຶ້ນກັບຫ້ອງການໂຍທາທິການ ແລະ ຂົນສົ່ງ, ສ່ວນດ້ານວິຊາການຂຶ້ນກັບກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ມີພາລະບົດບາດໃນການຂຶ້ນທະບຽນ, ພິມໃບທະບຽນ ແລະ ກວດກາເຕັກນິກຍານພາຫະນະທາງບົກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງຮັບປະກັນການບໍລິການໃຫ້ມີຄວາມ ສະດວກ, ວ່ອງໄວ, ໂປ່ງໃສ, ເປັນລະບຽບຮຽບຮ້ອຍ ແລະ ຖືກຕ້ອງ ຕາມມາດຕະຖານເຕັກນິກ.

**ມາດຕາ 57 ສິດ ແລະ ໜ້າທີ່ ຂອງກອງທະບຽນກາງຍານພາຫະນະທາງບົກ**

ກອງທະບຽນກາງຍານພາຫະນະທາງບົກ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ວາງແຜນ, ຄຸ້ມຄອງ ແລະ ຕິດຕາມກວດກາ ກ່ຽວກັບວຽກງານຍານພາຫະນະທາງບົກ ໃນຂອບເຂດທົ່ວປະເທດ;
2. ນຳໃຊ້ ເຕັກນິກວິຊາການ ແລະ ເຕັກໂນໂລຊີໃໝ່ ທີ່ເໝາະສົມເຂົ້າໃນການຄຸ້ມຄອງ ແລະ ການບໍລິການ ການຂຶ້ນທະບຽນ ແລະ ກວດກາເຕັກນິກ ຍານພາຫະນະທາງບົກ;
3. ຄົ້ນຄວ້າ ສ້າງ ແລະ ປັບປຸງ ນິຕິກຳ, ປຶ້ມຄູ່ມື ໃນການຄຸ້ມຄອງ ແລະ ບໍລິການ ການຂຶ້ນທະບຽນ ແລະ ກວດກາເຕັກນິກ ຍານພາຫະນະທາງບົກ ເພື່ອສະເໜີຂັ້ນເທິງພິຈາລະນາ;

4. ຊີ້ນຳ, ສັງລວມ ແລະ ຕິດຕາມ ກວດກາ ການຂຶ້ນທະບຽນ, ການກວດກາເຕັກນິກ ຍານພາຫະນະທາງບົກ;

5. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ຖານຂໍ້ມູນການຂຶ້ນທະບຽນຍານພາຫະນະທາງບົກ ແລະ ສະໜອງຂໍ້ມູນກ່ຽວກັບຍານພາຫະນະທາງບົກ ໃຫ້ອົງການຈັດຕັ້ງລັດ, ເອກະຊົນທີ່ກ່ຽວຂ້ອງ ຫຼື ຕາມການສະເໜີ;

6. ເກັບ ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບວຽກງານຍານພາຫະນະທາງບົກ;

7. ສະໜອງ ວັດຖຸປະກອນ ກ່ຽວກັບການຂຶ້ນທະບຽນ, ການພິມໃບທະບຽນ ຍານພາຫະນະທາງບົກ ໃຫ້ກອງທະບຽນຍານພາຫະນະທາງບົກ ຂັ້ນແຂວງ ແລະ ຂັ້ນເມືອງ;

8. ອອກຄຳສັ່ງ ຢຸດການຂຶ້ນທະບຽນ, ລຶບລ້າງການຂຶ້ນທະບຽນທີ່ບໍ່ຖືກຕ້ອງ ຂອງກອງທະບຽນຍານພາຫະນະ ແຂວງ, ນະຄອນຫຼວງ ແລະ ນຳໃຊ້ມາດຕະການເພື່ອແກ້ໄຂບັນຫາດັ່ງກ່າວ;

9. ຮັບຄຳສະເໜີ ແລະ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການຂຶ້ນທະບຽນຍານພາຫະນະທາງບົກໃຫ້ ສະດວກ, ວ່ອງໄວ ແລະ ຖືກຕ້ອງຕາມກົດໝາຍ;

10. ສະໜອງສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກ ທີ່ເໝາະສົມ ໃຫ້ໜ່ວຍງານຕິດປ້າຍທະບຽນຍານພາຫະນະທາງບົກ ຂອງຂະແໜງການປ້ອງກັນຄວາມສະຫງົບ;

11. ປະສານສົມທົບກັບການຈັດຕັ້ງທີ່ກ່ຽວຂ້ອງ ໃນການເຄື່ອນໄຫວ ຄຸ້ມຄອງວຽກງານຍານພາຫະນະທາງບົກ;

12. ພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຍານພາຫະນະທາງບົກ ຕາມການມອບໝາຍຂອງຂັ້ນເທິງ;

13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຍານພາຫະນະທາງບົກ ຕໍ່ ກະຊວງໂຍທາທິການ ແລະ ຂົນສົ່ງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 58 ສິດ ແລະ ໜ້າທີ່ ຂອງກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ**

ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຂຶ້ນທະບຽນ, ພິມໃບທະບຽນ ແລະ ກວດກາເຕັກນິກ ຍານພາຫະນະທາງບົກ;

2. ຊີ້ນຳ, ສັງລວມ ແລະ ຕິດຕາມ ກວດກາ ການຂຶ້ນທະບຽນ, ການກວດກາເຕັກນິກ ຍານພາຫະນະທາງບົກຂອງກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ;

3. ນຳໃຊ້ຖານຂໍ້ມູນການຂຶ້ນທະບຽນຍານພາຫະນະທາງບົກ ແລະ ສະໜອງຂໍ້ມູນກ່ຽວກັບຍານພາຫະນະທາງບົກ ໃຫ້ອົງການຈັດຕັ້ງລັດ, ເອກະຊົນທີ່ກ່ຽວຂ້ອງ ຫຼື ຕາມການສະເໜີ;

4. ອອກຄຳສັ່ງ ຢຸດການຂຶ້ນທະບຽນ, ລຶບລ້າງການຂຶ້ນທະບຽນ ທີ່ບໍ່ຖືກຕ້ອງຂອງຕົນ ຫຼື ກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ ແລະ ນຳໃຊ້ມາດຕະການເພື່ອແກ້ໄຂບັນຫາດັ່ງກ່າວ;

5. ຮັບຄຳສະເໜີ ແລະ ແກ້ໄຂຂໍ້ຂັດແຍ່ງກ່ຽວກັບການຂຶ້ນທະບຽນຍານພາຫະນະທາງບົກ ໃຫ້ສະດວກ, ວ່ອງໄວ ແລະ ຖືກຕ້ອງຕາມກົດໝາຍ;

6. ເກັບ ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບການຂຶ້ນທະບຽນ, ພິມໃບທະບຽນຍານພາຫະນະທາງບົກ;

7. ປະສານສົມທົບກັບພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຂຶ້ນທະບຽນຍານພາຫະນະທາງບົກ;

8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຍານພາຫະນະທາງບົກ ຕໍ່ ກອງທະບຽນການຍານພາຫະນະທາງບົກ ແລະ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 59 ສິດ ແລະ ໜ້າທີ່ ຂອງກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ**

ກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຂຶ້ນທະບຽນ, ພິມໃບທະບຽນ ແລະ ກວດກາເຕັກນິກ ຍານພາຫະນະທາງບົກ ປະເພດລົດຈັກ ແລະ ກົນຈັກກະສິກຳ;

2. ນຳໃຊ້ຖານຂໍ້ມູນການຂຶ້ນທະບຽນຍານພາຫະນະທາງບົກ ແລະ ສະໜອງຂໍ້ມູນກ່ຽວກັບຍານພາຫະນະທາງບົກ ໃຫ້ອົງການຈັດຕັ້ງລັດ, ເອກະຊົນທີ່ກ່ຽວຂ້ອງ ຫຼື ຕາມການສະເໜີ;

3. ລົບລ້າງການຂຶ້ນທະບຽນ ທີ່ບໍ່ຖືກຕ້ອງຂອງຕົນ ພ້ອມທັງນຳໃຊ້ມາດຕະການເພື່ອແກ້ໄຂບັນຫາດັ່ງກ່າວ;

4. ພົວພັນ, ຮ່ວມມື ກັບ ໜ່ວຍງານຕິດປ້າຍຂອງຂະແໜງການປ້ອງກັນຄວາມສະຫງົບ ໃນການຜະລິດ ແລະ ຕິດປ້າຍທະບຽນຍານພາຫະນະທາງບົກ;

5. ຮັບຄຳສະເໜີ ແລະ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການຂຶ້ນທະບຽນຍານພາຫະນະທາງບົກ ໃຫ້ສະດວກ, ວ່ອງໄວ ແລະ ຖືກຕ້ອງຕາມກົດໝາຍ;

6. ເກັບ ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບການຂຶ້ນທະບຽນ, ພິມໃບທະບຽນ ຍານພາຫະນະທາງບົກ;

7. ປະສານສົມທົບກັບຫ້ອງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຂຶ້ນທະບຽນຍານພາຫະນະທາງບົກ;

8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຍານພາຫະນະທາງບົກ ຕໍ່ ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ແລະ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VIII
## ທຸລະກິດກ່ຽວກັບຍານພາຫະນະທາງບົກ

**ມາດຕາ 60 ການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ຂໍອະນຸຍາດດຳເນີນທຸລະກິດຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 61 ເງື່ອນໄຂໃນການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ**

ການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ຕ້ອງມີເງື່ອນໄຂ ຕົ້ນຕໍ ດັ່ງນີ້:

1. ທຶນ;
2. ສຳນັກງານ ຫຼື ສິ່ງປຸກສ້າງ, ສະຖານທີ່, ວັດຖຸປະກອນ ແລະ ພາຫະນະຮັບໃຊ້ ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ;
3. ນັກວິຊາການທີ່ມີປະສົບການ ແລະ ວິຊາສະເພາະທີ່ກ່ຽວຂ້ອງກັບທຸລະກິດຂອງຕົນ;
4. ໃບຢັ້ງຢືນທີ່ຕັ້ງຂອງສຳນັກງານ.

**ມາດຕາ 62 ປະເພດທຸລະກິດກ່ຽວກັບຍານພາຫະນະທາງບົກ**

ປະເພດທຸລະກິດກ່ຽວກັບຍານພາຫະນະທາງບົກ ມີ ດັ່ງນີ້:

1. ການນຳເຂົ້າ ແລະ ສົ່ງອອກ;
2. ການຈຳໜ່າຍ;
3. ການຜະລິດ ແລະ/ຫຼື ປະກອບ;
4. ສູນທົດສອບ;
5. ສູນກວດກາເຕັກນິກ;
6. ອູ່ສ້ອມແປງລົດ;
7. ທຸລະກິດອື່ນກ່ຽວກັບຍານພາຫະນະທາງບົກ.

**ມາດຕາ 63 ທຸລະກິດນຳການເຂົ້າ ແລະ ສົ່ງອອກ ຍານພາຫະນະທາງບົກ**

ທຸລະກິດການນຳເຂົ້າ ແລະ ສົ່ງອອກ ຍານພາຫະນະທາງບົກ ແມ່ນ ການດຳເນີນທຸລະກິດກ່ຽວກັບການນຳເຂົ້າຍານພາຫະນະທາງບົກ ເພື່ອຂາຍຍົກໃຫ້ຜູ້ດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ, ສົ່ງອອກຕໍ່, ເປັນຕົວແທນ ຫຼື ຊື້ ຍານພາຫະນະທາງບົກຈາກຜູ້ຜະລິດ, ປະກອບຍານພາຫະນະທາງບົກ ຢູ່ ສປປ ລາວ ເພື່ອຈຳໜ່າຍຢູ່ພາຍໃນ ຫຼື ສົ່ງອອກຕ່າງປະເທດ.

ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 64 ທຸລະກິດການຈຳໜ່າຍຍານພາຫະນະທາງບົກ**

ທຸລະກິດການຈຳໜ່າຍຍານພາຫະນະທາງບົກ ແມ່ນ ການດຳເນີນທຸລະກິດກ່ຽວກັບການ ຂາຍຍົກ, ຂາຍຍ່ອຍ ຍານພາຫະນະທາງບົກໃໝ່ ແລະ/ຫຼື ຍານພາຫະນະທາງບົກທີ່ນຳໃຊ້ແລ້ວ ລວມທັງອາໄຫຼ່ ຫຼື ເປັນຕົວແທນຈຳໜ່າຍຍານພາຫະນະທາງບົກ ຍີ່ຫໍ້ໃດໜຶ່ງ ຫຼື ຫຼາຍຍີ່ຫໍ້ ຊຶ່ງບໍ່ສາມາດນຳເຂົ້າ ແລະ ສົ່ງອອກໄດ້.

ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ອະນຸຍາດດຳເນີນທຸລະກິດ ການຈຳໜ່າຍຍານພາຫະນະທາງບົກ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 65 ທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ**

ທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ ແມ່ນ ການດຳເນີນທຸລະກິດກ່ຽວກັບການຜະລິດ ຫຼື ປະກອບ ຫຼື ທັງຜະລິດ ແລະ ປະກອບຍານພາຫະນະທາງບົກໂດຍຜະລິດ, ນຳເຂົ້າ ຫຼື ຊື້ຊິ້ນສ່ວນ ຈາກຜູ້ຜະລິດຢູ່ພາຍໃນ ຈຳນວນໜຶ່ງ ຫຼື ທັງໝົດ ເພື່ອປະກອບເປັນຍານພາຫະນະທາງບົກສົມບູນແລ້ວຈຳໜ່າຍຢູ່ພາຍໃນ ຫຼື ສົ່ງອອກຕ່າງປະເທດ.

ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ອະນຸຍາດດຳເນີນທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ.

**ມາດຕາ 66 ທຸລະກິດສູນທົດສອບຍານພາຫະນະທາງບົກ**

ທຸລະກິດສູນທົດສອບຍານພາຫະນະທາງບົກ ແມ່ນ ການດຳເນີນທຸລະກິດກ່ຽວກັບການທົດສອບຍານພາຫະນະເປັນຄັນ, ຊິ້ນສ່ວນ, ວັດສະດຸ ທີ່ນຳມາຜະລິດ ແລະ ປະກອບ ເພື່ອຢັ້ງຢືນຄຸນນະພາບ, ປະສິດທິພາບກ່ຽວກັບຍານພາຫະນະທາງບົກ ຕາມມາດຕະຖານເຕັກນິກຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ ໂດຍສອດຄ່ອງກັບມາດຕະຖານສາກົນ ທາງດ້ານຄຸນນະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມ.

ຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ອະນຸຍາດດຳເນີນທຸລະກິດ ສູນທົດສອບຍານພາຫະນະທາງບົກ.

**ມາດຕາ 67 ທຸລະກິດສູນກວດກາເຕັກນິກຍານພາຫະນະທາງບົກ**

ທຸລະກິດສູນກວດກາເຕັກນິກຍານພາຫະນະທາງບົກ ແມ່ນ ການດຳເນີນທຸລະກິດກ່ຽວກັບການກວດກາເຕັກນິກ, ພິສູດຄວາມຖືກຕ້ອງ, ປະເມີນຄວາມປອດໄພຂອງຍານພາຫະນະ ແລະ ສິ່ງແວດລ້ອມ ໃຫ້ຖືກຕ້ອງຕາມລະບຽບການທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ.

ຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ອະນຸຍາດດຳເນີນທຸລະກິດ ສູນກວດກາເຕັກນິກຍານພາຫະນະທາງບົກ.

**ມາດຕາ 68 ທຸລະກິດອູ່ສ້ອມແປງລົດ**

ທຸລະກິດອູ່ສ້ອມແປງລົດ ແມ່ນ ການດຳເນີນທຸລະກິດກ່ຽວກັບການສ້ອມແປງ, ຟື້ນຟູ ແລະ ຕົບແຕ່ງລົດ ໃຫ້ຢູ່ໃນສະພາບດີ ໃຊ້ງານໄດ້ ຖືກຕ້ອງຕາມມາດຕະຖານເຕັກນິກດ້ານ ຄຸນນະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມ.

ຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ອະນຸຍາດດຳເນີນທຸລະກິດ ອູ່ສ້ອມແປງລົດ ໂດຍປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 69 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຕາມທີ່ໄດ້ຮັບອະນຸຍາດ;
2. ໄດ້ຮັບ ຂໍ້ມູນ ຂ່າວສານ ທີ່ຈຳເປັນໃນການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ;
3. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ;
4. ຮັບປະກັນທາງດ້ານຄຸນນະພາບ, ມາດຕະຖານເຕັກນິກຂອງຍານພາຫະນະທາງບົກ ຫຼື ການບໍລິການຂອງຕົນ;
5. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກການບໍລິການຂອງຕົນ;
6. ປະກອບສ່ວນໃນການປົກປັກຮັກສາສິ່ງແວດລ້ອມ;
7. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການກວດກາການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ;
8. ເສຍ ພາສີ, ສ່ວຍສາອາກອນ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
9. ນຳໃຊ້ ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 70 ການໂຈະດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ**

ການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ຈະຖືກໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍທີ່ໄດ້ຮັບອະນຸຍາດ ຫຼື ການນຳເຂົ້າພາຫະນະ ບໍ່ໄດ້ມາດຕະຖານ;
3. ດຳເນີນທຸລະກິດບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບກົດໝາຍ;
4. ສ້າງຜົນເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
5. ບໍ່ດຳເນີນທຸລະກິດຕໍ່ເນື່ອງ ເປັນເວລາ ໜຶ່ງປີ.

ການໂຈະການດຳເນີນທຸລະກິດ ຕ້ອງກຳນົດເວລາອັນແນ່ນອນ ເພື່ອໃຫ້ເວລາໃນການແກ້ໄຂ ຫຼື ປັບປຸງໃຫ້ຄືນສູ່ສະພາບປົກກະຕິ.

**ມາດຕາ 71 ການຍົກເລີກການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ**

ການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ຈະຖືກຍົກເລີກໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີ ຂອງຜູ້ດຳເນີນທຸລະກິດໂດຍມີເຫດຜົນພຽງພໍ;
2. ຜູ້ດຳເນີນທຸລະກິດ ລະເມີດກົດໝາຍ ແລະ ສ້າງຜົນເສຍຫາຍ ຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມຢ່າງຮ້າຍແຮງ;
3. ບໍ່ແກ້ໄຂ ຫຼື ປັບປຸງ ຕາມກຳນົດເວລາໃນການສັ່ງໂຈະ;
4. ຖືກຖອນໃບອະນຸຍາດດຳເນີນທຸລະກິດ;
5. ສານຕັດສິນໃຫ້ລົ້ມລະລາຍ.

## ພາກທີ IX
## ສະມາຄົມທຸລະກິດຍານພາຫະນະທາງບົກ

**ມາດຕາ 72 ສະມາຄົມທຸລະກິດຍານພາຫະນະທາງບົກ**

ສະມາຄົມທຸລະກິດຍານພາຫະນະທາງບົກ ແມ່ນ ອົງການຈັດຕັ້ງສັງຄົມທີ່ບໍ່ຫວັງຜົນກຳໄລ ຊຶ່ງສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອເຕົ້າໂຮມເອົາບັນດາຫົວໜ່ວຍທຸລະກິດຍານພາຫະນະທາງບົກປະເພດດຽວກັນ ຫຼື ໃກ້ຄຽງກັນ, ມີພາລະບົດບາດປະສານສົມທົບກັບອົງການຄຸ້ມຄອງ ແລະ ກວດກາວຽກງານຍານພາຫະນະທາງບົກ, ໃຫ້ການຊ່ວຍເຫຼືອ, ໃຫ້ຄຳປຶກສາ, ໃຫ້ຄຳແນະນຳ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກ.

**ມາດຕາ 73 ສິດ ແລະ ໜ້າທີ່ ຂອງສະມາຄົມທຸລະກິດຍານພາຫະນະທາງບົກ**

ສະມາຄົມທຸລະກິດຍານພາຫະນະທາງບົກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ນິຕິກຳ ແລະ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຍານພາຫະນະທາງບົກໃຫ້ສະມາຊິກ;
2. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບການສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບຍານພາຫະນະທາງບົກ;
3. ເປັນຂົວຕໍ່ລະຫວ່າງອົງການຄຸ້ມຄອງ ແລະ ກວດກາ ວຽກງານຍານພາຫະນະທາງບົກ ແລະ ສະມາຊິກ;
4. ໄດ້ຮັບຂໍ້ມູນຈາກສະມາຊິກຂອງສະມາຄົມ ແລະ ອົງການຄຸ້ມຄອງ ແລະ ກວດກາ ວຽກງານຍານພາຫະນະທາງບົກ;

5. ຕິດຕາມການເຄື່ອນໄຫວຂອງສະມາຊິກໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

6. ໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງສະມາຊິກດ້ວຍກັນ;

7. ສະເໜີຍ້ອງຍໍສະມາຊິກທີ່ມີຜົນງານດີເດັ່ນ ໃນການເຄື່ອນໄຫວທຸລະກິດ, ປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ;

8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງສະມາຄົມຂອງຕົນ ຕໍ່ ອົງການຄຸ້ມຄອງ ແລະ ກວດກາວຽກງານຍານພາຫະນະທາງບົກ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 74 ການສ້າງຕັ້ງ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມທຸລະກິດຍານພາຫະນະທາງບົກ**

ຂັ້ນຕອນການສ້າງຕັ້ງ ສະມາຄົມທຸລະກິດຍານພາຫະນະທາງບົກ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ສຳລັບ ໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມທຸລະກິດຍານພາຫະນະທາງບົກ ລວມທັງລະບອບແບບແຜນວິທີເຮັດວຽກ ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ.

# ພາກທີ X
# ຂໍ້ຫ້າມ

**ມາດຕາ 75 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ໂດຍບໍ່ໄດ້ຮັບອະນຸຍາດ;

2. ປອມແປງ, ປິດບັງ, ປ່ຽນ, ສັບປ່ຽນ ປ້າຍທະບຽນຍານພາຫະນະ;

3. ຕໍ່ເຕີມ ແລະ ດັດແປງເຕັກນິກລົດ ໂດຍບໍ່ໄດ້ຮັບອະນຸຍາດ;

4. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;

5. ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ການຮ່ວມມືໃນການກວດກາຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ;

6. ນຳໃຊ້ຍານພາຫະນະທາງບົກ ທີ່ບໍ່ໄດ້ຂຶ້ນທະບຽນ ແລະ ຕິດປ້າຍທະບຽນຍານພາຫະນະບໍ່ຖືກຕ້ອງຕາມກົດໝາຍ;

7. ນຳໃຊ້ຍານພາຫະນະທາງບົກ ທີ່ຕິດປ້າຍບໍລິຫານຂອງລັດ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ຖືກຕ້ອງຕາມເປົ້າໝາຍ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 76 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ**

ຫ້າມ ຜູ້ດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ບໍ່ຖືກຕ້ອງຕາມປະເພດທີ່ໄດ້ຮັບອະນຸຍາດ ແລະ ບໍ່ຖືກຕ້ອງຕາມກົດໝາຍ;

2. ສົມຮູ້ຮ່ວມຄິດ, ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານຂອງລັດ;

3. ລາຍງານຂໍ້ມູນກ່ຽວກັບການດຳເນີນທຸລະກິດຂອງຕົນບໍ່ຖືກຕ້ອງ;

4. ປິດບັງ, ປອມແປງ, ບິດເບືອນ ແລະ ທຳລາຍ ຂໍ້ມູນກ່ຽວກັບການດຳເນີນທຸລະກິດຂອງຕົນ;

5. ບໍ່ໃຫ້ຄວາມຮ່ວມມື, ໝິ່ນປະໝາດ, ນາບຂູ່ ແລະ ທຳຮ້າຍຮ່າງກາຍເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 77 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ, ເປັນຮຸ້ນສ່ວນ, ເປັນນັກວິຊາການໃຫ້ວິສາຫະກິດກ່ຽວກັບຍານພາຫະນະທາງບົກທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;

2. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບທາງລັດຖະການ;

3. ສົມຮູ້ຮ່ວມຄິດ, ທວງເອົາ, ຂໍເອົາ, ຮັບສິນບົນ, ໃຊ້ອຳນາດເກີນຂອບເຂດ, ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານກ່ຽວກັບຍານພາຫະນະທາງບົກ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ ແລະ ພັກພວກ;

4. ຂຶ້ນທະບຽນ, ອອກປ້າຍທະບຽນ ຍານພາຫະນະທາງບົກ ໂດຍບໍ່ຖືກຕ້ອງຕາມປະເພດ ແລະ ກົດໝາຍ;

5. ຂຶ້ນທະບຽນຍານພາຫະນະທາງບົກທີ່ດັດແປງ ຮູບຮ່າງ ແລະ ເຕັກນິກໂດຍບໍ່ໄດ້ຮັບອະນຸຍາດ;

6. ໝິ່ນປະໝາດ, ໃຊ້ວາຈາ, ທ່າທີບໍ່ສຸພາບ ແລະ ນາບຂູ່ ບຸກຄົນທີ່ມາໃຊ້ບໍລິການ ກໍຄືຜູ້ຊົມໃຊ້ຍານພາຫະນະທາງບົກ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ XI

# ການຄຸ້ມຄອງ ແລະ ກວດກາ ວຽກງານຍານພາຫະນະທາງບົກ

## ໝວດທີ 1

## ການຄຸ້ມຄອງວຽກງານຍານພາຫະນະທາງບົກ

**ມາດຕາ 78 ອົງການຄຸ້ມຄອງວຽກງານຍານພາຫະນະທາງບົກ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຍານພາຫະນະທາງບົກ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຍານພາຫະນະທາງບົກ ປະກອບດ້ວຍ:

1. ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງອື່ນ ທີ່ກ່ຽວຂ້ອງ;

2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ແລະ ພະແນກການອື່ນ ທີ່ກ່ຽວຂ້ອງ;

3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ແລະ ຫ້ອງການອື່ນ ທີ່ກ່ຽວຂ້ອງ;

4. ອົງການປົກຄອງບ້ານ.

### ມາດຕາ 79 ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ

ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບຍານພາຫະນະທາງບົກ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ເປັນນິຕິກຳໃຕ້ກົດໝາຍ, ແຜນການ, ແຜນງານ ແລະໂຄງການ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ພ້ອມທັງປູກຈິດສຳນຶກ ໃຫ້ທົ່ວປວງຊົນ ຮັບຮູ້ ແລະ ເຂົ້າໃຈ;

4. ບຳລຸງ, ສ້າງ ແລະ ຄຸ້ມຄອງນຳໃຊ້ ບຸກຄະລາກອນ ກ່ຽວກັບວຽກງານຍານພາຫະນະທາງບົກ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

5. ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ;

6. ອະນຸຍາດນຳເຂົ້າທາງດ້ານເຕັກນິກຍານພາຫະນະທາງບົກ ແລະ ນຳເຂົ້າ ຖັງລົດ, ຊາຊີ, ໜ່ວຍຈັກ ແລະ ອາໄຫຼ່ທີ່ນຳໃຊ້ແລ້ວ;

7. ອະນຸຍາດດັດແປງ ຮູບຮ່າງ ແລະ ເຕັກນິກ;

8. ກຳນົດ ມາດຕະຖານ ເຕັກນິກ ແລະ ເລືອກເຟັ້ນເຕັກໂນໂລຊີທີ່ເໝາະສົມກ່ຽວກັບວຽກງານຍານພາຫະນະທາງບົກ ພ້ອມທັງອອກຄຳແນະນຳໃນການຈັດຕັ້ງປະຕິບັດ;

9. ຄຸ້ມຄອງ ແລະ ຢັ້ງຢືນ ຜົນການທົດສອບ ຍານພາຫະນະທາງບົກ, ຊິ້ນສ່ວນ, ວັດສະດຸອຸປະກອນທີ່ຜະລິດ ແລະ ປະກອບ ຢູ່ ສປປ ລາວ;

10. ກຳນົດມາດຕະຖານເຕັກນິກ, ໃບທະບຽນ, ປ້າຍທະບຽນ, ສູນກວດກາເຕັກນິກ ແລະ ອູ່ສ້ອມແປງລົດ ລວມທັງຄຸ້ມຄອງຖານຂໍ້ມູນ, ສະຖິຕິ ກ່ຽວກັບການຂຶ້ນທະບຽນລົດ ໃນຂອບເຂດທົ່ວປະເທດ;

11. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກັບວຽກງານຍານພາຫະນະທາງບົກ;

12. ຮັບ ແລະ ແກ້ໄຂຄຳສະເໜີ ກ່ຽວກັບຍານພາຫະນະທາງບົກ;

13. ພົວພັນ, ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານຍານພາຫະນະທາງບົກ;

14. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຍານພາຫະນະທາງບົກ ຕໍ່ລັດຖະບານຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 80 ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ

ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ພ້ອມທັງປູກຈິດສຳນຶກ ໃຫ້ທົ່ວປວງຊົນ ຮັບຮູ້ ແລະ ເຂົ້າໃຈ;

2. ສະເໜີ ບຳລຸງ, ສ້າງ ແລະ ຄຸ້ມຄອງນຳໃຊ້ ບຸກຄະລາກອນກ່ຽວກັບວຽກງານຍານພາຫະນະທາງບົກ;

3. ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ;

4. ອະນຸຍາດດັດແປງ ຮູບຮ່າງ ແລະ ເຕັກນິກ;

5. ຄຸ້ມຄອງ ສູນກວດກາເຕັກນິກ, ອູ່ສ້ອມແປງຍານພາຫະນະທາງບົກ ແລະ ກິດຈະການທີ່ກ່ຽວກັບຍານພາຫະນະທາງບົກ;

6. ປະສານສົມທົບກັບພະແນກການ ແລະ ອົງການປົກຄອງຂັ້ນເມືອງທີ່ກ່ຽວຂ້ອງ ກັບວຽກງານຍານພາຫະນະທາງບົກ;

7. ຮັບ ແລະ ແກ້ໄຂຄຳສະເໜີ ກ່ຽວກັບຍານພາຫະນະທາງບົກ;

8. ພົວພັນ, ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານຍານພາຫະນະທາງບົກ ຕາມການມອບໝາຍ;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຍານພາຫະນະທາງບົກ ຕໍ່ ກະຊວງໂຍທາທິການ ແລະ ຂົນສົ່ງ, ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 81 ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ**

ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ ແລະ ປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຍານພາຫະນະທາງບົກ;

2. ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ພ້ອມທັງປູກຈິດສຳນຶກ ໃຫ້ທົ່ວປວງຊົນ ຮັບຮູ້ ແລະ ເຂົ້າໃຈ;

3. ສະເໜີ ບຳລຸງ, ສ້າງ ບຸກຄະລາກອນກ່ຽວກັບວຽກງານຍານພາຫະນະທາງບົກ;

4. ຄຸ້ມຄອງການຂຶ້ນທະບຽນ ແລະ ກວດກາເຕັກນິກ ຍານພາຫະນະທາງບົກ ປະເພດ ລົດຈັກ, ກົນຈັກກະສິກຳ ຕາມການມອບໝາຍ;

5. ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບຍານພາຫະນະທາງບົກ ຕາມການມອບໝາຍ;

6. ຄຸ້ມຄອງ ອູ່ສ້ອມແປງລົດ, ການກວດກາເຕັກນິກ ລົດຈັກ ແລະ ລົດກົນຈັກກະສິກຳ ຕາມການມອບໝາຍ;

7. ປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງຂັ້ນບ້ານ ກ່ຽວກັບວຽກງານຍານພາຫະນະທາງບົກ;

8. ຮັບ ແລະ ແກ້ໄຂຄຳສະເໜີ ກ່ຽວກັບຍານພາຫະນະທາງບົກ;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຍານພາຫະນະທາງບົກ ຕໍ່ ພະແນກໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 82 ສິດ ແລະ ໜ້າທີ່ ຂອງຂະແໜງການປ້ອງກັນຄວາມສະຫງົບ**

ຂະແໜງການປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ;

4. ປະສານສົມທົບກັບຂະແໜງການໂຍທາທິການ ແລະ ຂົນສົ່ງ, ຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງ ແລະ ປະຕິບັດ ວຽກງານຍານພາຫະນະທາງບົກ;

5. ກວດກາຂໍ້ມູນຍານພາຫະນະທາງບົກທີ່ຈະນຳໄປຜະລິດປ້າຍທະບຽນຍານພາຫານະ;

6. ຄຸ້ມຄອງ, ຜະລິດ ແລະ ຕິດປ້າຍທະບຽນຍານພາຫະນະ;

7. ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບຍານພາຫະນະທາງບົກ;

8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຍານພາຫະນະທາງບົກ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 83 ສິດ ແລະ ໜ້າທີ່ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ**

ຂະແໜງການອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບຍານພາຫະນະທາງບົກ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມ ຢ່າງທົ່ວເຖິງ;

3. ພິຈາລະນາການຂໍອະນຸຍາດ ນຳເຂົ້າ, ສົ່ງອອກ, ນຳເຂົ້າ ເພື່ອສົ່ງອອກຕໍ່ ແລ້ວຈຶ່ງແຈ້ງໃຫ້ຂະແໜງການ ການເງິນ ຮັບຊາບ;

4. ພິຈາລະນາການສະເໜີ ສ້າງຕັ້ງ, ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດຍານພາຫະນະທາງບົກ;

5. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ນຳສະເໜີລັດຖະບານ ເພື່ອກຳນົດ ແລະ ດັດສົມຫົວໜ່ວຍທຸລະກິດການນຳເຂົ້າ ແລະ ສົ່ງອອກ, ຈຳໜ່າຍຍານພາຫະນະທາງບົກ ໃຫ້ເໝາະສົມຕາມສະພາບການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

6. ຮັບ ແລະ ແກ້ໄຂຄຳສະເໜີ ຂອງຜູ້ດຳເນີນທຸລະກິດຍານພາຫະນະທາງບົກ ແລະ ຜູ້ຊົມໃຊ້;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຍານພາຫະນະທາງບົກ ຕໍ່ຂັ້ນເທິງຊາບ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 84 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານຍານພາຫະນະທາງບົກ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານຍານພາຫະນະທາງບົກ ໃຫ້ແກ່ປະຊາຊົນພາຍໃນຂອບເຂດບ້ານຂອງຕົນ;

2. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງກັບວຽກງານຍານພາຫະນະທາງບົກ;

3. ຢັ້ງຢືນເອກະສານທີ່ກ່ຽວຂ້ອງກັບຍານພາຫະນະທາງບົກ ເຊັ່ນ ໃບຢັ້ງຢືນທີ່ຢູ່, ການຊື້ ຂາຍ, ການຮັບປະກັນ ແລະ ອື່ນໆ;

4. ເກັບກຳຂໍ້ມູນ ແລະ ສະຖິຕິ ຍານພາຫະນະທາງບົກ ໃນຂອບເຂດບ້ານຂອງຕົນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 85 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ຕິດຕາມ, ກວດກາ, ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ນຳໃຊ້ຍານພາຫະນະທາງບົກທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນໃຫ້ຂະແໜງການໂຍທາທິການ ແລະ ຂົນສົ່ງ.

## ໝວດທີ 2
## ການກວດກາວຽກງານຍານພາຫະນະທາງບົກ

**ມາດຕາ 86 ອົງການກວດກາວຽກງານຍານພາຫະນະທາງບົກ**

ອົງການກວດກາວຽກງານຍານພາຫະນະທາງບົກ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບ ອົງການຄຸ້ມຄອງວຽກງານຍານພາຫະນະທາງບົກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 78 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ, ສື່ມວນຊົນ ແລະ ໜ່ວຍງານກວດສອບອິດສະລະສະເພາະດ້ານ.

**ມາດຕາ 87 ເນື້ອໃນການກວດກາວຽກງານຍານພາຫະນະທາງບົກ**

ການກວດກາວຽກງານຍານພາຫະນະທາງບົກ ມີເນື້ອໃນ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ແຜນການລົງທຶນ ແລະ ການພັດທະນາ, ກົດໝາຍ, ການສ້າງຕັ້ງ, ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ ກ່ຽວກັບວຽກງານຍານພາຫະນະທາງບົກ;

2. ກວດກາການເຄື່ອນໄຫວຂອງຜູ້ດຳເນີນທຸລະກິດ ແລະ ການບໍລິການ ທີ່ກ່ຽວຂ້ອງກັບທຸລະກິດຍານພາຫະນະທາງບົກ;

3. ກວດກາມາດຕະຖານເຕັກນິກຍານພາຫະນະທາງບົກທາງດ້ານ ຄຸນນະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມ;

4. ກວດກາຜົນກະທົບຕໍ່ສິ່ງແວດລ້ອມ ເນື່ອງຈາກການເຄື່ອນໄຫວວຽກງານຍານພາຫະນະທາງບົກ.

**ມາດຕາ 88 ຮູບການການກວດກາຍານພາຫະນະທາງບົກ**

ການກວດກາຍານພາຫະນະທາງບົກ ມີ ສາມຮູບການ ດັ່ງນີ້:

1. ກວດກາຢ່າງເປັນປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ

2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງແຈ້ງໃຫ້ຜູ້ຈະຖືກກວດກາຮູ້ລ່ວງໜ້າ

3. ກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຈະຖືກກວດກາຮູ້ລ່ວງໜ້າ.

ໃນການດໍາເນີນການກວດການັ້ນ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ XII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 89 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 90 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XIII
## ບົດບັນຍັດສຸດທ້າຍ

**ມາດຕາ 91 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 92 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດໍາລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ